# CHAMPA 占芭 ຈໍາປາ

09/2015 ສະບັບທີ 120




**ງານຖ່າຍຮູບສາກົນດາລີຄັ້ງທີ 6 ປີ 2015 ໄດ້ຈັດຂຶ້ນຢ່າງຄຶກຄື້ນ**

**ງານຕາງປະເທດດ້ານການທ່ອງທ່ຽວ, ເລີ່ມເລື່ອງເຈີນດ້ວຍຫຼາຍຮູບແບບ**

**ຮ້ອງຂໍຈັດເກມກິລາໂອລິມປິກລະດູໜາວ, ໃຫ້ຄວາມຈິງໃຈດຶງດູດໃຈຊາວໂລກ**

ISSN 1673-3266

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871－96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ






Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

ບໍລິສັດເຮືອນແປນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕົວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ: ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບ ສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ວນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

WANJIE 万杰彩钢

**老挝万杰彩钢**
**活动板房有限公司**




















Tel：021 720509 ；020 54606278（chinese ） 020 55557178 （Lao ）
Mob：0086 13758972039 （China

---

ໂຮງແຮມເມືອງທອງ
Muangthong Hotel



孟通酒店
孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。
房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适
自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普；巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上 3.免费早餐 4.可以在酒店办登机手续和出机票 5.可用车接送琅勃拉邦机场到酒店。




www.muangthonglpb.com

ການບິນລາວ
Lao Airlines

ຈຳປາໂຮລິເດ
Champa Holidays

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຊັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານ້ຳຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ, ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌, ໂມຣິດ,ກິເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ.“ຍີ່ຫໍ້ດັງວິສະວະກຳກໍ່ສ້າງຢຸນນານ”ໄດ້ກາຍເປັນ“ຍີ່ຫໍ້ດັງທີ່ມີຊື່ສຽງ”ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.




ວັນທີ 31 ເດືອນ 7,ເດັກນ້ອຍຄົນໜຶ່ງໄດ້ສະເຫຼີມສະຫຼອງໃນໂອກາດທີ່ປັກກິ່ງຮ່ວມກັບຈາງເຈຍໂຂວໄດ້ຮັບສິດທີ່ຄັດເລືອກເປັນເຈົ້າພາບຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປີ 2022 ຢ່າງສຳເລັດຜົນຢູ່ສະຖາບັນກິລາເຊີນຢາງ

7月31日，一名小朋友在沈阳体育学院庆祝北京携手张家口获得2022年冬奥会举办权　　新华社 图



# ສາລະບານ

09/2015 ສະບັບທີ 120









## ສາລະຄະດີພິເສດ 本刊特稿

08.ນະຄອນຫຼວງປັກກິ່ງຮ່ວມກັບເມືອງຈ່າງເຈ່ຍໂຂວໄດ້ຮັບສິດຄັດເລືອກເປັນເຈົ້າພາບຮ້ອງຂໍຈັດງານກິລາໂອລິມປິກລະດູໜາວຢ່າງສຳເລັດຜົນ

10.ຮ້ອງຂໍຈັດງານກິລາໂອລິມປິກລະດູໜາວ, ໃຊ້ຄວາມຈິງໃຈດຶງດູດໃຈຊາວໂລກ

14.ງານກິລາໂອລິມປິກລະດູໜາວຈະນຳເອົາຫຍັງມາໃຫ້?

## ໜຶ່ງແລວທາງ ໜຶ່ງເສັ້ນທາງ "一带一路"

20."ໜຶ່ງແລວທາງ ໜຶ່ງເສັ້ນທາງ" ຊຸກຍູ້ການໄປມາຫາສູ່ກັນດ້ານເສດຖະກິດການຄ້າລະຫວ່າງອາຊີກັບເອີລົບ

## ຄວາມໄຝ່ຝັນຂອງຈີນ 中国梦

22.ທ່າຕ້າຫລຽນ

## ປະຕູເມືອງຈີນ 中国之窗

24.ການຕ່າງປະເທດດ້ານການທ່ອງທ່ຽວ,ເລົ່າເລື່ອງຈີນດ້ວຍຫຼາຍຮູບແບບ

## ລວມຈຸດຢູນນານ 聚焦云南

32.ພູຊີ່ສ່ານເມືອງຄຸນມິງ ກ້າວເຂົ້າສູ່ເສັ້ນທາງນິເວດສີຂຽວ

## ວິສະວະກຳກໍ່ສ້າງຢູນນານ 云南建工

38.ທ່ານ ຈາງກາວຫລີ ຢ້ຽມຢາມສຳຫລວດໂຄງການອັງມິດຕະພາບລະຫວ່າງຈີນ-ຫວຽດນາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານ

## ການທ່ອງທ່ຽວທົ່ວສະໜາມ 旅游纵横

44.10 ເສັ້ນທາງຍ່າງຫຼິ້ນທີ່ງົດງາມທີ່ສຸດຂອງຈີນ

## ລຽບຊົມວັດທະນະທຳ 文化博览

48.ງານຖ່າຍຮູບສາກົນດາລີຄັ້ງທີ 6 ປີ 2015 ໄດ້ຈັດຂຶ້ນຢ່າງຄຶກຄື້ນ

## ປະຊາຊາດຈີນ 中华民族

52.ວັນບຸນເໜີ່ງຂອງຊົນເຜົ່າຊວຍກຸ້ຍໂຈວ

## ບໍລິການເພື່ອທ່ານ 为您服务

54.ກິນຫຍັງແດ່, ຈຶ່ງສາມາດນຳເອົາຈິດໃຈທີ່ດີມາໃຫ້ທ່ານ

## ຮຽນພາສາຈີນ 学汉语

56. ຮຽນພາສາຈີນ

发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D
地址：云南省昆明市环城西路577号
编辑部电话：86–871–64112975
办公室电话：86–871–64101644
传真：86–871–64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856–21–254866

广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D
ສະຖານທີ່: ຖະໜົນຫວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86–871–64112975　64101644
ແຟກ: 86–871–64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີ ໂທ: 00856-21-254866

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ¥10

主　　管　中华人民共和国国务院新闻办公室
主　　办　云南省人民政府新闻办公室
协　　办　云南建工集团有限公司
编辑出版　《占芭》杂志社

总 顾 问　赵　金　卯稳国
顾　　问　张红平　宣宇才　蔡春生
　　　　　张瑞才　李联斌　刘　荣
社　　长　李　茜
副 社 长　吴静波　田虎青　海　江

总 编 辑　杨　云
总编室主任　禹正玉
总编室副主任　汪伟云
编辑总监　王志谦
编辑部副主任　苏雯雯　中文编辑　张　蕾
翻　　译　北京外国语大学亚非学院
　　　　　李小元　吴敦信　刘仁和
老挝文译审　刘仁和
老挝文编辑　白　艳
美术总监　祝　群
网络总监　张守义
总监助理　张俊宏
网络部副主任　李　涛
编　　辑　李文君　李沁颖　韩佐伊
发行部主任　邹和平
发　　行　陈　龙
编　　务　陆　蕊　何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ　ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ　ຫ້ອງການຂ່າວປົກຄອງແຂວງຢູນນານ
ອົງການປະສານງານ　ກຸ່ມບໍລິສັດວິສະວະກຳກໍ່ສ້າງຢູນນານຈຳກັດ
ຮຽບຮຽງພິມຈຳໜ່າຍ　ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່　ຈາວຈິນ ເມົາເວີນກົວ

ທີ່ປຶກສາ　ຈ່າງຫົງພິງ ຊຽນຢູ່ຍໄຊ ໄຊຊຸນແຊງ
　ຈ່າງຢູ້ຍໄຊ ລີລຽນປິ່ນ ລິວຢົງ
ຜູ້ອຳນວຍການໃຫຍ່　ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່　ອູຈິນໂປ ທຽນຫູຊິນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່　ຢາງຢູນ
ຫົວໜ້າພິມຈຳໜ່າຍ　ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ　ຫວ່າງເວີຍຢູນ
ຫົວໜ້າບັນນາທິການ　ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ　ຊູ່ເວີນເວີນ　ບັນນາທິການພາສາຈີນ ຈາງລຸຍ
ຜູ້ແປພາສາລາວ　ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
　ຫຼີຊຽວຢວນ ອຸດົນສິນ ລິວເຢີນເຫີ
ຜູ້ກວດແກ້ພາສາລາວ　ລິວເຢີນເຫີ
ບັນນາທິການພາສາລາວ　ປາຍຍຽນ
ຜູ້ຄຸມງານຝ່າຍສິລະປະ　ຈູ້ສິນ
ຜູ້ຄຸມງານຝ່າຍອິນເຕີເນັດ　ຈາງເຊີຢີ　ຜູ້ຊ່ວຍຜູ້ຄຸມງານ　ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ　ລີທາວ　ບັນນາທິການ　ລີເວີນຈູນ　ລີຊີ້ງຢິງ ຮານໂຈ່ວຢີ
ຫົວໜ້າພະແນກແຈກຈ່າຍ　ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ　ແຊງລົງ
ພະນັກງານຝ່າຍປົກຄອງ　ລູຢູຍ　ເຫີຢູລານ

图 / 新华社

# ນະຄອນຫຼວງປັກກິ່ງຮ່ວມກັບເມືອງຈ່າງເຈ່ຍໂຂວໄດ້ຮັບສິດຄັດເລືອກເປັນເຈົ້າພາບຮ້ອງຂໍຈັດງານກິລາໂອລິມປິກລະດູໜາວຢ່າງສໍາເລັດຜົນ




ວັນທີ 31 ເດືອນ 7,ກ່ອນຈະລົງຄະແນນສຽງປ່ອນບັດຂອງຄະນະກໍາມະການໂອລິມປິກສາກົນ,ທ່ານ ສີຈິ້ນຜິງ ປະທານປະເທດຈີນໄດ້ກ່າວຄໍາປາໄສຕໍ່ຄະນະກໍາມະການໂອລິມປິກສາກົນໂດຍຜ່ານໜ້າຈໍ

7 月 31 日，在国际奥委会投票表决前，中国国家主席习近平通过视频向国际奥委会委员致辞

## 北京携手张家口申办冬奥会成功

北京令世界再次心动，中国将续写奥运辉煌。国际奥委会第 128 次全会 7 月 31 日下午在马来西亚吉隆坡投票决定，将 2022 年冬奥会举办权交给北京。

ປັກກິ່ງໄດ້ສະເທືອນໃຈຊາວໂລກອີກຄັ້ງໜຶ່ງ,ປະເທດຈີນຈະສືບຕໍ່ສ້າງຄວາມສົດໃສແຫ່ງງານກິລາໂອລິມປິກ. ຕອນບ່າຍວັນທີ 31 ກໍລະກົດ 2015 ນີ້,ກອງປະຊຸມຄົບຄະນະຄັ້ງທີ 128 ຂອງຄະນະກໍາມະການໂອລິມປິກສາກົນໄດ້ລົງຄະແນນສຽງຢູ່ນະຄອນກົວລາລໍາເປີຂອງມາເລເຊຍໂດຍຕົກລົງວ່າ,ຄັດເລືອກນະຄອນຫຼວງປັກກິ່ງເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວປີ 2022. ທ່ານສີຈິ້ນຜິງ,ເລຂາທິການໃຫຍ່ສູນກາງພັກຄອມມູນິດຈີນ,ປະທານປະເທດຈີນ,ປະທານຄະນະກໍາມະການການທະຫານສູນກາງໄດ້ສົ່ງຈົດໝາຍສະແດງຄວາມຊົມເຊີຍຕໍ່ຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວ.

ໃນຈົດໝາຍຊົມເຊີຍຂຽນວ່າ,ນະຄອນຫຼວງປັກກິ່ງຮ່ວມກັບເມືອງຈ່າງເຈ່ຍໂຂວໄດ້ຖືກຄັດເລືອກໃຫ້ເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວຄັ້ງທີ 24 ໃນປີ 2022,ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຢ່າງອົບອຸ່ນໄປຍັງບັນດາທ່ານ.ບັນດາທ່ານໄດ້ທໍາຄວາມພະຍາຍາມຢ່າງມະຫາສານເພື່ອຮ້ອງຂໍເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວ.ຫວັງວ່າພວກທ່ານຈະພະຍາຍາມເຮັດວຽກຢ່າງໜັກແໜ້ນຕໍ່ໄປ,ຈັດງານກິລາໂອລິມປິກລະດູໜາວໃນປີ 2022 ໃຫ້ເປັນງານມະຫະກໍາໂອລິມປິກທີ່ໜ້າປະທັບໃຈບໍ່ທໍາມະດາ ແລະ ຍອດຢ້ຽມຄັ້ງໜຶ່ງໂດຍພາຍໃຕ້ການສະໜັບສະໜູນຂອງປະຊາຊົນບັນດາເຜົ່າທົ່ວປະເທດຈີນ.

ຕອນຄໍ່າວັນທີ 31 ກໍລະກົດປີ 2015, ທ່ານ ຫລິວຢຸນສ່ານ,ກໍາມະການປະຈໍາກົມການເມືອງສູນກາງພັກ,ຄະນະເລຂາສູນກາງໄດ້ເຂົ້າຮ່ວມກິດຈະກໍາສະເຫຼີມສະຫຼອງຂອງມວນຊົນທີ່ຈັດຂຶ້ນຢູ່ສວນໂອລິມປິກປັກກິ່ງ,ແລະ ກ່າວຄໍາປາໄສ.ໃນກິດຈະກໍາ,ທ່ານ ລີ້ຈ້ານຊູ່,ກໍາມະການກົມການເມືອງສູນກາງພັກ,ຫົວໜ້າຫ້ອງວ່າການສູນກາງ




ວັນທີ 31 ເດືອນ 7,ທ່ານ ຫລິວຢຸນຊານ ກໍາມະການກົມການເມືອງປະຈໍາເລຂາຄະນະເລຂາສູນກາງພັກກອມມູນິດຈີນມາເຖິງສວນໂອລິມປິກປັກກິ່ງເພື່ອເຂົ້າຮ່ວມການເຄື່ອນໄຫວສະເຫຼີມສະຫລອງນະຄອງຫຼວງປັກກິ່ງ ແລະ ເມືອງຈາງເຈຍໂຈວຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປີ 2022 ຢ່າງສໍາເລັດຜົນ ແລະ ຂຶ້ນກ່າວຄໍາປາໄສ

7 月 31 日，中共中央政治局常委、中央书记处书记刘云山来到北京奥林匹克公园，出席北京市、张家口市成功申办 2022 年冬奥会群众庆祝活动并发表讲话

ພັກໄດ້ອ່ານຈົດໝາຍຊົມເຊີຍຂອງທ່ານ ສີຈິ້ນຜິງ.ທ່ານກົວຈິ່ນລົງ,ກໍາມະການກົມການເມືອງສູນກາງພັກ,ເລຂາຄະນະພັກນະຄອນຫຼວງປັກກິ່ງໄດ້ເປັນປະທານຈັດກິດຈະກໍາ ແລະ ກ່າວວ່າ,ພາຍໃຕ້ການນໍາພາອັນເຂັ້ມແຂງຂອງສູນກາງພັກ ແລະ ຄະນະລັດຖະບານຈີນ,ຈະສືບຕໍ່ທໍາຄວາມພະຍາຍາມຢ່າງສຸດໃຈ,ຈັດງານກິລາໂອລິມປິກລະດູໜາວໃຫ້ດີ,ສ້າງຄວາມສົດໃສອີກຄັ້ງໜຶ່ງຂອງງານກິລາໂອລິມປິກ.ທ່ານ ລິວຊີປາວ,ກໍາມະການກົມການເມືອງສູນກາງພັກ,ຫົວໜ້າຄະນະໂຄສະນາສູນກາງພັກ,ທ່ານ ປາງຈິ່ງ,ຄະນະເລຂາສູນກາງພັກ,ທີ່ປຶກສາແຫ່ງລັດຈີນ,ແລະ ພະນັກງານການນໍາອື່ນໆໄດ້ເຂົ້າຮ່ວມກິດຈະກໍາສະເຫຼີມສະຫຼອງ.

ຕອນເຊົ້າວັນທີ 31 ກໍລະກົດ,ກ່ອນການລົງຄະແນນສຽງຂອງຄະນະກໍາມະການໂອລິມປິກສາກົນ,ທ່ານ ສີຈິ້ນຜິງ ໄດ້ຜ່ານວີດີໂອປະກອບຄໍາເຫັນຕໍ່ສະມາຊິກໍາມະການໂອລິມປິກສາກົນ,ຕາງໜ້າລັດຖະບານ ແລະ ປະຊາຊົນຈີນສະແດງຄວາມຄອງຄອຍ ແລະ ການສະໜັບສະໜູນຢ່າງເດັດດ່ຽວຕໍ່ການຈັດງານກິລາໂອລິມປິກລະດູໜາວປີ 2022, ກ່າວວ່າລັດຖະບານຈີນຊົມເຊີຍເປັນຢ່າງສູງຕໍ່ຄ່ານິຍົມຂອງກິລາໂອລິມປິກ ແລະ ເຈຕະນາປະຕິຮູບຂອງຄະນະກໍາມະການໂອລິມປິກສາກົນ,ຈະປະຕິບັດຕາມຄໍາໝັ້ນສັນຍາທຸກປະການຢ່າງຮອບດ້ານ,ຈັດຕັ້ງປະຕິບັດ "ວາລະໂອລິມປິກ 2020" ຢ່າງຮອບດ້ານ.

ໃນສະຖານທີ່ຈັດກອງປະຊຸມຄັ້ງທີ 128 ຂອງຄະນະກໍາມະການໂອລິມປິກສາກົນ,ທ່ານນາງ ລິວຢຽນຕົ່ງ,ກໍາມະການກົມການເມືອງສູນກາງພັກ,ຮອງນາຍົກລັດຖະມົນຕີຈີນໄດ້ກ່າວປິດລາຍງານ,ກ່າວຢ້ຳຫຼັກໝັ້ນຂອງລັດຖະບານຈີນທີ່ເດັດດ່ຽວສະໜັບສະໜູນນະຄອນຫຼວງປັກກິ່ງຮ່ວມກັບເມືອງຈ່າງເຈ່ຍໂຂວຮ້ອງຂໍເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວໃນປີ 2022.

ໃນການລົງຄະແນນສຽງໂດຍບໍ່ຈົດຊື່ຂອງສະມາຊິກຄະນະກໍາມະການໂອລິມປິກສາກົນນັ້ນ,ປັກກິ່ງໄດ້ຮັບ 44 ຄະແນນ,ໄດ້ຮັບສິດເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວປີ 2022.

ປະເທດຈີນກໍ່ກາຍເປັນປະເທດທີ 9 ທີ່ໄດ້ຈັດງານກິລາໂອລິມປິກລະດູຮ້ອນ ແລະ ງານກິລາໂອລິມປິກລະດູໜາວ.ສໍາລັບນະຄອນຫຼວງປັກກິ່ງກໍ່ກາຍເປັນຕົວເມືອງແຫ່ງທໍາອິດທີ່ໄດ້ຮັບສິດເປັນເຈົ້າພາບຈັດງານກິລາໂອລິມປິກລະດູໜາວ ແລະ ລະດູຮ້ອນ.



8 月 2 日，中共中央政治局委员、国务院副总理刘延东率北京 2022 申办冬奥会代表团回到北京，受到首都各界群众代表的热烈欢迎

ວັນທີ 2 ເດືອນ 8,ທ່ານນາງ ຫລິວຢຽນຕຸງ ກໍາມະການກົມການເມືອງສູນກາງພັກກອມມູນິດຈີນ,ຮອງນາຍົກລັດຖະມົນຕີຈີນນໍາພາຄະນະຮ້ອງຂໍຈັດງານກິລາໂອລິມປິກລະດູໜາວໃນປີ 2022 ຂອງປັກກິ່ງກັບຄືນສູ່ປັກກິ່ງ,ໄດ້ຮັບຄວາມຍິນດີຕ້ອນຮັບຢ່າງຟົດຟື້ນຈາກຕົວແທນມວນຊົນທຸກຊັ້ນຄົນວັນນະນະຄອນຫຼວງປັກກິ່ງ

图 / 新华社

# ຮ້ອງຂໍຈັດງານກິລາໂອລິມປິກລະດູໜາວ, ໃຊ້ຄວາມຈິງໃຈດຶງດູດໃຈຊາວໂລກ



ວັນທີ 31 ເດືອນ 7,ທ່ານບາເຫີ ປະທານຄະນະກຳມະການໂອລິມປິກສາກົນໄດ້ມອບໃບຢັ້ງຢືນແດ່ທ່ານນາງຫລິວຢຽນຕຸງ ຫົວໜ້າຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປີ 2022 ປັກກິ່ງ,ຮອງນາຍົກລັດຖະມົນຕີຈີນໃນກອງປະຊຸມຄົບຄະນະຄັ້ງທີ 128 ຄະນະກຳມະການໂອລິມປິກສາກົນເພື່ອສະແດງຄວາມຍ້ອງຍໍສັນລະເສີນປະເທດຈີນໄດ້ປະກອບສ່ວນເຂົ້າໃນການຊຸກຍູ້ສົ່ງເສີມກິລາໂອລິມປິກ

7 月 31 日，国际奥委会主席巴赫在国际奥委会第 128 次全会上向北京申冬奥代表团团长、国务院副总理刘延东赠予证书，以表彰中国为推动奥林匹克做出的贡献

## 申冬奥，用真诚打动世界

陈述用时 45 分钟，以真诚打动评委、赢得信任，北京申冬奥代表团成功做到了这一点。

作为此次申冬奥的最重要内容，北京申冬奥代表团显然是有备而来、信心满满。以真诚、自信打动世界的北京申冬奥代表团，回报国际奥委会和世界的将是“言必信、行必果”，将是一届精彩、非凡、卓越的冬奥会。

ການບັນລະຍາຍດ້ວຍເວລາ 45 ນາທີ,ສະເທືອນໃຈກຳມະການ ແລະ ຍາດໄດ້ຄວາມໄວ້ວາງໃຈດ້ວຍຄວາມຈິງໃຈ,ຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປັກກິ່ງໄດ້ສຳເລັດໜ້າທີ່ຢ່າງຈົບງາມ.

ການບັນລະຍາຍຄັ້ງນີ້ຖືວ່າເປັນເນື້ອໃນອັນສຳຄັນທີ່ສຸດໃນການຮ້ອງຂໍຈັດງານກິລາໂອລິມປິກລະດູໜາວ, ຄະນະຜູ້ແທນປັກກິ່ງໄດ້ກຽມພ້ອມແລ້ວ,ແລະ ມີຄວາມໝັ້ນໃຈເປັນຢ່າງສູງ.

ຄວາມຈິງໃຈຕ້ອງຢູ່ບົນພື້ນຖານຂອງກຳລັງຕົວຈິງ

ທ່ານ ອີໄຈ້ຊິ່ງ,ຮອງປະທານຄະນະກຳມະການໂອລິມປິກສາກົນເປັນຜູ້ຮັບຜິດຊອບຂອງທີມງານບັນລະຍາຍກ່ຽວກັບການຮ້ອງຂໍເປັນເຈົ້າພາບຈັດງານກິລາໂລອິມປິກລະດູໜາວປັກກິ່ງ, ໂດຍປະເຊີນໜ້າກັບສະມາຊິກຂອງຄະນະກຳມະການໂອລິມປິກສາກົນ,ທ່ານ ອີໄຈຊິ່ງ ໄດ້ຂຶ້ນຕົ້ນດ້ວຍຄວາມເວົ້າວ່າ,“ພວກຂ້າພະເຈົ້າມີຄວາມຫວັງຢ່າງສຸດໃຈວ່າຈະໄດ້ຮັບຄວາມໄວ້ວາງໃຈອີກເທື່ອໜຶ່ງຈາກບັນດາທ່ານ,ຈັດງານກິລາໂລອິມປິກລະດູໜາວຄັ້ງໜຶ່ງທີ່ສອດຄ່ອງກັບຄວາມປາຖະໜາຂອງຄະນະກຳມະການໂອລິມປິກສາກົນ,ແລະ ສອດຄ່ອງກັບວາລະໂອລິມປິກ 2020 ເປັນຢ່າງສູງ.” ຖ້າວ່າຄວາມເວົ້າດັ່ງກ່າວພຽງແຕ່ເປັນຄວາມປາຖະໜາ ແລະ ຄວາມຄອງຄອຍຊະນິດໜຶ່ງເທົ່ານັ້ນ,ຖັດມາ,ທ່ານກ່າວຕື່ມອີກວ່າ,“ໃນຖານະເປັນຄູ່ຮ່ວມມືທີ່ໜ້າເຊື່ອຖື ແລະ ໄວ້ວາງໃຈທີ່ສຸດຂອງຄະນະກຳມະການໂອລິມປິກສາກົນ ແລະ ຄະນະກຳມະການໂອລິມປິກຄົນພິການສາກົນ,ປັກກິ່ງຍິນດີສືບທອດ ແລະ ເສີມສ້າງສາຍພົວພັນຄູ່ຮ່ວມມືແນວນີ້ຕື່ມອີກໃນປີ 2022,ປະຕິບັດຕາມຄຳໝັ້ນສັນຍາທັງໝົດ” ເຊິ່ງສະແດງໃຫ້ເຫັນເຖິງຄວາມໝັ້ນໃຈຢ່າງປ່ຽມລົ້ນ.

ປະຕິບັດຕາມຄຳໝັ້ນສັນຍາແນວໃດ?ທ່ານ ວາງອ່ານຊຸ້ນ,ປະທານຄະນະກຳມະການຮ້ອງຂໍຈັດງານກິລາໂລອິມປິກລະດູໜາວປັກກິ່ງ,ເຈົ້າຄອງນະຄອນຫຼວງປັກກິ່ງກ່າວວ່າ, “ພວກຂ້າພະເຈົ້າມີພື້ນຖານໂຄງລ່າງຄົມມະນາຄົມທີ່ດີ,ມີບົດຮຽນດ້ານການຈັດງານທີ່ອຸດົມສົມບູນ, ສາມາດຮັບປະກັນຄວາມສະດວກດ້ານການເດີນທາງຂອງກຸ່ມແຂກຕ່າງໆທີ່ມາຮ່ວມງານ.” ທ່ານລິວເພີງ,ປະທານຄະນະກຳມະການໂອລິມປິກຈີນ,ຫົວໜ້າກົມໃຫຍ່ກິລາແຫ່ງຊາດຈີນກໍ່ໄດ້ສະແດງຄວາມໝັ້ນໃຈຂອງວົງການກິລາຈີນໃນດ້ານຄວາມສາມາດໃນການຈັດງານແຂ່ງຂັນ,ທ່ານກ່າວວ່າ,“ພວກຂ້າພະເຈົ້າມີຄວາມສາມາດຈັດງານແຂ່ງຂັນລະດູໜາວທີ່ດີເດັ່ນ,ເຄີຍຈັດງານກິລາອາຊີລະດູໜາວ,ງານກິລານັກສຶກສາໂລກລະດູໜາວ, ແລະ ງານແຂ່ງຂັນລະດັບທະວີບ ແລະ ສາກົນຫຼາຍເທື່ອ. ພາຍໃຕ້ການສະໜັບສະໜູນຂອງສະຫະພັນກິລາລາຍການດ່ຽວສາກົນ ແລະ ການຊີ້ນຳຂອງນັກວິຊາການຕ່າງປະເທດ,ຄວາມສາມາດຈັດງານຂອງພວກຂ້າພະເຈົ້າຈະເປັນສິ່ງຮັບປະກັນທີ່ໄວ້ໃຈໄດ້ທີ່ສຸດໃຫ້ແກ່ການຈັດງານກິລາໂລອິມປິກລະດູໜາວປັກກິ່ງ ແລະ ງານກິລາໂອລິມປິກລະດູໜາວສຳລັບຄົນພິການໃນປີ 2022.”

ຖັດມາ,ທ່ານນາງ ຢາງລານ ໄດ້ສະແດງໃຫ້ເຫັນເຖິງຄວາມໝັ້ນໃຈຂອງນະຄອນຫຼວງປັກກິ່ງ ແລະ ເມືອງຈ່າງເຈ່ຍໂຂວໃນດ້ານການບຸກເບີກຕະຫຼາດ ແລະ ຮັບປະກັນດ້ານທຶນຮອນ.ທ່ານນາງ ຢາງລານ ກ່າວວ່າ, “ປັກກິ່ງໄດ້ສ້າງສະຖິຕິຫຼາຍສະບັບໃນການປະຕິບັດແຜນການບຸກເບີກຕະຫຼາດໃນປີ 2008,ໄດ້ສ້າງລາຍຮັບເປັນມູນຄ່າ



ວັນທີ 9 ເດືອນ 6,ຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປີ 2022 ປັກກິ່ງ ແລະ ກຳມະການໂອລິມປິກສາກົນຈັດງານບັນລະຍາຍແລກປ່ຽນຄວາມຄິດຄວາມເຫັນຂອງຕົນທີ່ໂລຊັນສະວິດເຊີແລນ.ນີ້ແມ່ນສະຖານທີ່ບັນລະຍາຍແລກປ່ຽນ

6 月 9 日，北京 2022 申冬奥代表团在瑞士洛桑与国际奥委会委员举行陈述交流会。这是陈述交流会现场

1.2 ຕື້ໂດລາສະຫະລັດໃນການບຸກເບີກຕະຫຼາດພາຍໃນ. ວິສາຫະກິດທັງພາຍໃນ ແລະ ຕ່າງປະເທດໄດ້ຜ່ານການແຂ່ງຂັນຢ່າງຕັ້ງໜ້າເພື່ອຍາດສິດຮ່ວມມືໃນການຈັດງານກິລາໂອລິມປິກ.ຜົນສຳເລັດໃນງານກິລາໂອລິມປິກລະດູຮ້ອນ,ໄດ້ສ້າງພື້ນຖານໃຫ້ແກ່ພວກຂ້າພະເຈົ້າເພື່ອສ້າງຜົນງານໃໝ່ໃນການຈັດງານກິລາໂລອິມປິກລະດູໜາວ,ແລະ ຈະເປັນສິ່ງຮັບປະກັນດ້ານການເງິນອັນຍາວນານໃຫ້ແກ່ງານກິລາໂອລິມປິກ,ແລະ ຮັກສາກຽດສັກສີຂອງງານກິລາໂອລິມປິກ."

## ຄວາມຈິງໃຈສາມາດສະແດງອອກຢ່າງມ່ວນຊື່ນ

ທ່ານ ຢາວມິງ ທີ່ເປັນທູດຕົວແທນ 2022 ປັກກິ່ງຜໍປາກົດຕົວກໍ່ກາຍເປັນຈຸດສຸມຂອງຄົນທັງຫຼາຍ.ເພິ່ນກໍ່ສາມາດສະແດງຄວາມຕະຫຼົກໃນສະຖານທີ່ອັນເຄັ່ງຂຶມ.ເພິ່ນເວົ້າວ່າ,"ບັນດາທ່ານອາດຈະຖືວ່າບານບ້ວງບໍ່ແມ່ນລາຍການລະດູໜາວ,ເພາະວ່າມັນຈະບໍ່ແຂ່ງຂັນຢູ່ເທິງນ້ຳກ້າມ ແລະ ຫິມະ.ແຕ່ລະດູການແຂ່ງຂັນບານບ້ວງຢູ່ເຂດສ່ວນຫຼາຍຂອງໂລກແມ່ນຈັດຂຶ້ນຢູ່ໃນລະດູໜາວ,ສະນັ້ນທ່ານກໍ່ສາມາດຖືບານບ້ວງເປັນລາຍການລະດູໜາວ." ທ່ານ ຢາວມິງ ໄດ້ເວົ້າເຖິງການເຂົ້າຮ່ວມການແຂ່ງຂັນຢູ່ສະໜາມກິລາອູເຄີ່ຊົ່ງທີ່ນະຄອນຫຼວງປັກກິ່ງໃນປີ 2008, ແລະ ເວົ້າວ່າສະໜາມກິລາອູເຄີ່ຊົ່ງຈະສືບຕໍ່ຈັດການແຂ່ງຂັນຮອກກີເທິງນ້ຳກ້າມ.ສຳລັບທ່ານຊົ້ງອ່ານຕົ່ງທີ່ເລີ່ມຫຼິ້ນຮອກກີນ້ຳກ້າມມາແຕ່ຍາມນ້ອຍ,ໃນຫວ່າງກ່ອນນີ້ບໍ່ດົນໄດ້ເຂົ້າເປັນນັກກິລາໃນສະຫະພັນຮອກກີເທິງນ້ຳກ້າມອາຊີບຂອງອາເມລິກາເໜືອ,ເພິ່ນກໍ່ຫວັງວ່າເຂົ້າຮ່ວມງານກິລາໂອລິມປິກລະດູໜາວ 2022 ຢູ່ປັກກິ່ງ.

ເມື່ອທ່ານ ຢາວມິງ ເຊີນຊວນນາງຢາງຢາງ,ກຳມະການຄະນະກຳມະການໂອລິມປິກສາກົນ,ນາງຢາງຢາງກໍ່ເວົ້າຢອກດ້ວຍຄວາມສູງຂອງທ່ານຢາວມິງ.ນາງຢາງຢາງເວົ້າວ່າ,"ຂ້າພະເຈົ້າຮູ້ສຶກດີໃຈຫຼາຍທີ່ໄດ້ມີໂອກາດຢືນຢູ່ຄຽງຂ້າງທ່ານຢາວມິງ.ແມ່ນແທ້,ຂ້າພະເຈົ້າແມ່ນຢືນຢູ່, ເພິ່ນຈັ່ງແມ່ນສູງອີຫຼີ."ທ່ານ ຢາວມິງ ຫົວຂຶ້ນ,ທ່ານ



ວັນທີ 31 ເດືອນ 7,ສະມາຊິກຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປັກກິ່ງສະເຫຼີມສະຫລອງການໄດ້ຮັບສິດທີ່ຈັດງານກິລາໂອລິມປິກລະດູໜາວ
7 月 31 日，北京申冬奥代表团成员庆祝获得举办权



ໂທມັສບັກປະທານຄະນະກຳມະການໂອລິມປິກສາກົນພ້ອມດ້ວຍໝູ່ຮ່ວມງານກໍ່ຫົວຂຶ້ນ.

ຄວາມຕະຫຼົກ ແລະ ຄວາມມ່ວນຊື່ນແນວນີ້,ມີກຳລັງແຮງທີ່ສະເທືອນໃຈຍິ່ງຫຼາຍ.ກໍ່ແມ່ນໃນຂະນະທີ່ທ່ານຢາວມິງ ແລະ ນາງຢາງຢາງສະແດງຄວາມໝັ້ນໃຈ ແລະ ຄວາມມີສະເໜ່ຂອງຕົນນັ້ນ,ພາບພົດໃໝ່ຂອງນັກກິລາຈີນກໍ່ໄດ້ຮັບຄວາມສົນໃຈຈາກທົ່ວໂລກ.

## ເຂົ້າໃກ້ຊິດຈິ່ງສະແດງຄວາມຈິງໃຈຍິ່ງຂຶ້ນ



ວັນທີ 31 ເດືອນ 7,ລີນີນາ(ຊ້າຍມື)ທູດພາບພົດປີ 2022 ຜູ້ຊະນະເລີດໂລກທັກສະກາງຫາວເລ່ນສະເກັດຫິມະເສລີ ແລະ ທ່ານນາງ ຢາງຢາງ ກຳມະການໂອລິມປິກສາກົນຜູ້ຊະນະເລີດໂລກເລ່ນສະເກັດນ້ຳແຂງຄວາມໄວສູງທາງສັ້ນງານກິລາໂອລິມປິກລະດູໜາວກຳລັງດຳເນີນການບັນລະຍາຍຢູ່
7 月 31 日，北京 2022 形象大使、自由式滑雪空中技巧世界冠军李妮娜（左）和国际奥委会委员、冬奥会短道速滑冠军杨扬进行陈述

ທ່ານ ວາງອ່ານຊຸ້ນ ກ່າວວ່າ,"ສາຍສຳພັນລະຫວ່າງຂ້າພະເຈົ້າກັບງານກິລາໂອລິມປິກ,ແມ່ນເລີ່ມແຕ່ການກະກຽມຈັດງານກິລາໂອລິມປິກປັກກິ່ງ 2008.ໃນເວລານັ້ນ,ໜ້າທີ່ຮັບຜິດຊອບຕົ້ນຕໍຂອງຂ້າພະເຈົ້າແມ່ນຮັບປະກັນຈັດງານຢ່າງສຳເລັດຜົນ,ແລະ ຈິ່ງຊັບສິນອັນອຸດົມສົມບູນ,ສ້າງຜົນປະໂຫຍດໃຫ້ແກ່ຕົວເມືອງ ແລະ ປະຊາຊົນ." ວາຈາແບບເປີດອົກເປີດໃຈແນວນີ້,ສອດຄ່ອງກັບຄວາມຈິງ ແລະ ໜ້າເຊື່ອຖືເຊິ່ງເຮັດໃຫ້ຜູ້ບັນລະຍາຍກັບກຳມະການຄະນະກຳມະການໂອລິມປິກສາກົນເຂົ້າໃກ້ຊິດກວ່າເກົ່າ.

ທ່ານນາງ ຈ່າງໄຫຕີ,ປະທານຄະນະກຳມະການໂອລິມປິກຄົນພິການຈີນເວົ້າວ່າ,"ເມື່ອ 55 ປີກ່ອນ,ຂ້າພະເຈົ້າເປັນອຳມະພາດຍ້ອນໜື້ວສາຍເລືອດສັນຫຼັງ,ຈິ່ງຕ້ອງນັ່ງກັບລົດລໍ້.ແຕ່ວ່າຈິດໃຈຂ້າພະເຈົ້າຫາກແມ່ນແລ່ນໄປທາງໜ້າຮ່ວມກັບນັກກິລາ."ນາງ ຢາງຢາງ ບັນລະຍາຍວ່າ, "ຂ້າພະເຈົ້າເປັນຜູ້ສາວທຳມະດາທີ່ມາຈາກພາກຕາເວັນອອກສຽງເໜືອຂອງຈີນ,ແລະ ມີຄວາມກະຕືລືລົ້ນຫຼາຍທີ່ສຸດຕໍ່ການຫຼິ້ນສະເກັດນ້ຳກ້າມ."ນາງລີນີນາ,ທູດຕົວແທນ 2022 ປັກກິ່ງເວົ້າວ່າ,"ຂ້າພະເຈົ້າເຕີບໃຫຍ່ຂຶ້ນຢູ່ພາກເໜືອຂອງຈີນ,ຈາກເມືອງຈ່າງເຈ່ຍໂຂວບໍ່ໄກປານໃດ.ຫິມະ,ເຮັດໃຫ້ຂ້າພະເຈົ້າຫຼົງໄຫຼໃນສະເໜ່ຂອງມັນ.ໃນອາຍຸ 10 ປີ,ການຫຼິ້ນສະເກັດກໍ່ກາຍເປັນພາກສ່ວນໜຶ່ງໃນຊີວິດຂອງຂ້າພະເຈົ້າ.ຢູ່ໃນລະດູໜາວທີ່ຍືດຍາວນັ້ນ,ຄວາມໃຝ່ຝັນທີ່ຢາກກາຍເປັນຜູ້ຊະນະເລີດໃນລາຍການກິລາສະເກັດ,ເປັນແຮງຊຸກຍູ້ໃຫ້ຂ້າພະເຈົ້າຍຶດໝັ້ນການເຝິກຊ້ອມມາໂດຍຕະຫຼອດ."

ການບັນລະຍາຍເຫຼົ່ານີ້ລ້ວນແຕ່ແມ່ນພົວພັນກັບປະສົບການພິເສດຂອງເຂົາເຈົ້ານັ້ນເອງເຊິ່ງພິສູດໃຫ້ເຫັນວ່າ "ກິລາມີກຳລັງແຮງທີ່ປ່ຽນແປງຊີວິດຄົນເຮົາ ແລະ ປ່ຽນແປງໂລກ".ສຳລັບຄະນະຜູ້ແທນຮ້ອງຂໍຈັດງານກິລາໂອລິມປິກລະດູໜາວປັກກິ່ງທີ່ໄດ້ສ້າງແຮງດຶງດູດຈິດໃຈຊາວໂລກດ້ວຍຄວາມຈິງໃຈ ແລະ ຄວາມໝັ້ນໃຈ,ຈະຕອບແທນຕໍ່ຄະນະກຳມະການໂອລິມປິກສາກົນ ແລະ ໂລກດ້ວຍ"ຄຳໝັ້ນສັນຍາທີ່ໜ້າເຊື່ອຖືໄດ້,ແລະ ການດຳເນີນງານທີ່ຈະໄດ້ຮັບຜົນສຳເລັດ",ແລະ ຈະເປັນງານກິລາໂອລິມປິກລະດູໜາວຄັ້ງໜຶ່ງທີ່ໂດດເດັ່ນໜ້າສົນໃຈທີ່ສຸດ.

图 / 新华社

# ງານກິລາໂອລິມປິກລະດູໜາວຈະນຳເອົາຫຍັງມາໃຫ້?

## 冬奥会将带来什么?

“BEIJING 2022” ——7 月 31 日，当这一组合出现在国际奥委会主席巴赫举起的纸页上时，国人无不心潮澎湃。人们开始以各种方式庆祝北京携手张家口获得 2022 年冬奥会的举办权。鸟巢外的巨型屏幕下，聚集的群众纷纷拍照留念；北京奥林匹克公园庆典广场上，大型联欢活动高潮迭起；张家口各条街道上，商家挂起国旗，市民更以欢庆传统节日的方式跳起舞蹈……

“BEIJING 2022”--- ວັນທີ 31 ກໍລະກົດປີ 2015,ຫຼັງຈາກຕົວໜັງສືເຫຼົ່ານີ້ປາກົດຕົວຢູ່ເທິງໃບເຈ້ຍໃນກຳມືຂອງທ່ານໂທມັສບັກ,ປະທານຄະນະກຳມະການໂອລິມປິກສາກົນແລ້ວ,ຊາວຈີນທັງຫຼາຍລ້ວນແຕ່ມີຄວາມຕື່ນເຕັ້ນທີ່ສຸດ.ປະຊາຊົນຈີນເລີ່ມໃຊ້ຮູບການຕ່າງໆເພື່ອສະເຫຼີມສະໝອງນະຄອນຫຼວງປັກກິ່ງຮ່ວມກັບເມືອງຈ່າງເຈ່ຍໂຂວໄດ້ຮັບສິດເປັນເຈົ້າພາບໃນການຈັດງານກິລາໂອລິມປິກລະດູໜາວປີ 2022.ຢູ່ກ້ອງໜ້າຈໍໃຫຍ່ຂອງສະໜາມກິລາຮັງນົກ,ປະຊາຊົນທີ່ຊຸມນຸມກັນພາກັນຖ່າຍຮູບເປັນທີ່ລະລຶກ;ຢູ່ສະໜາມຫຼວງສວນໂອລິມປິກປັກກິ່ງ,ໄດ້ຈັດກິດຈະກຳຂະໜາດໃຫຍ່ຢ່າງເບີກບານມ່ວນຊື່ນ;ຢູ່ຕາມຖະໜົນຫົນທາງຕ່າງໆຂອງເມືອງຈ່າງເຈ່ຍໂຂວ,ໄດ້ແຂວນທຸງຊາດຕາມຮ້ານຄ້າຕ່າງໆ,ປະຊາຊົນໄດ້ຟ້ອນລຳທຳເພງດ້ວຍວິທີຫຼິ້ນບຸນປະເພນີ.



ວັນທີ 31 ເດືອນ 7,ພະນັກງານອະວຸໂສບຳນານເມືອງຊຽວຊີນະຄອນຈາງເຈຍໂຈວແຂວງເຫີເປີຍເຕົ້າໂຮມຢູ່ນຳກັນ,ສະເຫຼີມສະຫລອງປັກກິ່ງຈັບມືກັນກັບນະຄອນຈາງເຈຍໂຂວໄດ້ຮັບສິດທີ່ຈັດງານກິລາໂອລິມປິກລະດູໜາວປີ 2022

7 月 31 日，河北省张家口市桥西区退休老干部齐聚一堂，庆祝北京携手张家口获得 2022 年冬奥会举办权





ປະຊາຊົນທົ່ວປະເທດອອກກຳລັງກາຍ--ພ້ອມກັນຍ່າງເພື່ອຊຸກຍູ້ການຮ້ອງຂໍຈັດງານກິລາໂອລິມປິກລະດູໜາວ

全民健身——健步走助力申冬奥

ຢູ່ເບື້ອງຫຼັງແຫ່ງຄວາມຄຶກຄື້ນມ່ວນຊື່ນນີ້,ຄວາມຈິງແລ້ວແມ່ນຄວາມປາຖະໜາຂອງປະຊາຊົນ.ພາຍຫຼັງງານກິລາໂອລິມປິກປັກກິ່ງ 2008 ແລ້ວ,ຊາວຈີນບໍ່ພຽງແຕ່ມີຄວາມຕື່ນເຕັ້ນໃຈ ແລະ ພາກພູມໃຈຍ້ອນວ່າງານມະຫາກຳຈັດຢູ່ປະເທດຊາດຈີນເທົ່ານັ້ນ,ຍັງໄດ້ຮັບຜົນປະໂຫຍດທີ່ແທ້ຈິງຈາກງານກິລາໂອລິມປິກ.ປະຈຸບັນ,ສະໜາມກິລາທີ່ຈັດການແຂ່ງຂັນໃນງານກິລາໂອລິມປິກປັກກິ່ງປີ 2008 ໄດ້ກາຍເປັນສະຖານທີ່ອອກກຳລັງກາຍຂອງປະຊາຊົນ,ຄົນມະນາຄົມລົດເມທີ່ໄດ້ເພີ່ມຄວາມສາມາດນັ້ນກໍ່ໄດ້ອຳນວຍຄວາມສະດວກໃຫ້ແກ່ການເດີນທາງຂອງພົນລະເມືອງ,ສະນັ້ນ,ປັກກິ່ງຈຶ່ງໄດ້ມີຄວາມມີສະເໜ່ຂອງຕົວເມືອງສາກົນ.

ຄັນຊັ້ນ,ການຈັດງານກິລາໂອລິມປິກລະດູໜາວປີ 2022,ຈະນຳເອົາອີຫຍັງມາໃຫ້?

1. ທົ່ວປວງຊົນອອກກຳລັງກາຍ: ນຳພາ 300 ລ້ານຄົນເຂົ້າຮ່ວມກິລາເທິງຫິມະ ແລະ ນ້ຳກ້ອນ

ໃນບົດລາຍງານຮ້ອງຂໍຈັດງານທີ່ປັກກິ່ງສະເໜີໃຫ້ຄະນະກຳມະການໂອລິມປິກສາກົນນັ້ນຂຽນວ່າ,ປັກກິ່ງຮ້ອງຂໍຈັດງານກິລາໂອລິມປິກລະດູໜາວສຳເລັດຜົນ,ຈະນຳພາ 300 ລ້ານຄົນເຂົ້າຮ່ວມກິລາເທິງຫິມະ ແລະ ນ້ຳກ້ອນ.ທ່ານໂທມັສບັກໄດ້ສະແດງຄວາມຊົມເຊີຍຕໍ່ເລື່ອງນີ້,ທ່ານກ່າວວ່າ,“ປັກກິ່ງໄດ້ພົນລະນາອະນາຄົດທີ່ເຜີຍແຜ່ກິລາເທິງຫິມະ ແລະ ນ້ຳກ້ອນກວ້າງອອກໄປສູ່ຫຼາຍຮ້ອຍລ້ານຄົນ.”ທ່ານກ່າວວ່າ,ລັດຖະບານຈີນໄດ້ສັງເກດ



ຊຸກຍູ້ການຮັບເອົາຈັດງານກິລາໂອລິມປິກລະດູໜາວ.ລາຍການຫຼິ້ນສະເກັດນ້ຳແຂງທີ່ມະໄດ້ກ້າວເຂົ້າສູ່ໂຮງຮຽນປະຖົມຢຽນສິງ
助力申冬奥 冰雪项目走进延庆小学校园

ເທັນບົດບາດດ້ານການສຶກສາ ແລະ ສັງຄົມຂອງກິລາ, ໂດຍຜ່ານງານກິລາໂອລິມປິກລະດູໜາວເພື່ອເຜີຍແຜ່ກິລາເຫິງຫິມະ ແລະ ນ້ຳກ້າມ,ເປັນສິ່ງທີ່ຄະນະກຳມະການໂອລິມປິກສາກົນຊົມເຊີຍຫຼາຍທີ່ສຸດ.

ຄົນປັກກິ່ງໄດ້ມີມູນເຊື້ອຫຼິ້ນສະເກັດນ້ຳກ້າມມາເປັນເວລາເຫິງນານແລ້ວ.ການຮັບອົງຂໍຈັດງານກິລາໂອລິມປິກລະດູໜາວ 2022 ຢ່າງສຳເລັດຜົນ,ໄດ້ກະຕຸ້ນຄວາມຫ້າວຫັນຂອງຊາວຈີນໃນການຫຼິ້ນກິລາເຫິງຫິມະ ແລະ ນ້ຳກ້າມ, ໂດຍສະເພາະແມ່ນນະຄອນຫຼວງປັກກິ່ງ ແລະ ເມືອງຈ່າງເຈ່ຍໂຂວ.ນາງ ລິວສ້ຽວຣຸຍ ທີ່ອາໄສຢູ່ເມືອງຈ່າງເຈ່ຍໂຂວມີຄວາມຮູ້ສຶກໂດຍກົງ,ລາວເວົ້າວ່າ,“ເມື່ອ 5 ປີກ່ອນ,ຂ້ອຍຮຽນຫຼິ້ນສະເກັດຢູ່ບ້ານເກີດ,ໃນເວລານັ້ນສະໜາມຫຼິ້ນສະເກັດຍັງບໍ່ຫຼາຍປານໃດ,ຜູ້ທີ່ໄປຫຼິ້ນສະເກັດນັ້ນສ່ວນຫຼາຍເປັນຄົນທ້ອງຖິ່ນແຫ່ງນັ້ນ.ແຕ່ວ່າໃນຊຸມປີມໍ່ໆມານີ້,ໄດ້ສ້າງສະໜາມສະເກັດຂະໜາດໃຫຍ່ນັບມື້ນັບຫຼາຍຂຶ້ນ,ຜູ້ຫຼິ້ນສະເກັດກໍ່ນັບມື້ນັບເພີ່ມຂຶ້ນ.”

ທ່ານ ຈຽງຊຸ້ຽວອີ,ຮອງປະທານສະມາຄົມຊຸກຍູ້ພັດທະນາຕົວເມືອງໂອລິມປິກປັກກິ່ງກ່າວວ່າ,“ງານກິລາໂອລິມປິກລະດູໜາວເປັນໂອກາດທີ່ດີສຳລັບການຈັດຕັ້ງປະຕິບັດແຜນການຍຸດທະສາດທົ່ວປວງຊົນອອກກຳລັງກາຍ,ຈະຊຸກຍູ້ພັດທະນາກິລາເຫິງຫິມະ ແລະ ນ້ຳກ້າມຂອງຈີນຢ່າງແຂງແຮງ.”

ເຮັດແນວນີ້ຈຶ່ງສາມາດນຳໃຊ້ໂອກາດຈັດງານກິລາໂອລິມປິກລະດູໜາວເພື່ອນຳພາ 300 ລ້ານຄົນເຂົ້າຮ່ວມກິລາເຫິງຫິມະ ແລະ ນ້ຳກ້າມ,ທ່ານລິວເພີງ,ຫົວໜ້າກົມໃຫຍ່ກິລາແຫ່ງຊາດຈີນກ່າວວ່າ,ຈະຖືໂອກາດທີ່ປັກກິ່ງຮັບອົງຂໍຈັດງານກິລາໂອລິມປິກລະດູໜາວເປັນແຮງຊຸກຍູ້,ໃຊ້ເວລາ 7 ປີ,ໂດຍຜ່ານຈາກການຊຸກຍູ້ຂອງລັດຖະບານ,ການຊັກນຳຂອງນະໂຍບາຍ,ການວາງແຜນຂອງແຜນຜັງ,ການປຸກລະດົມດ້ວຍການໂຄສະນາ,ແລະວິທີອື່ນໆເພື່ອປະຕິບັດຕາມແຕ່ລະຂັ້ນຕອນ.“ກ່ອນອື່ນແມ່ນເພີ່ມທະວີການກໍ່ສ້າງສະໜາມຫຼິ້ນສະເກັດ,ເພື່ອຕອບສະໜອງຕາມຄວາມຕ້ອງການຂອງປະຊາຊົນໃນດ້ານຈຳນວນ.”

ປະຈຸບັນ,ໃນທົ່ວປະເທດໄດ້ສ້າງສະໜາມສະເກັດ 500 ກວ່າແຫ່ງ.ຈຳນວນຜູ້ເຂົ້າຮ່ວມເພີ່ມຂຶ້ນກໍ່ເຮັດໃຫ້ກິລາເຫິງຫິມະ ແລະ ນ້ຳກ້າມນັ້ນເປີດກວ້າງໄປສູ່ພາກໃຕ້,ສະໜາມສະເກັດໄດ້ຖືກສ້າງຂຶ້ນນັບມື້ນັບຫຼາຍຂຶ້ນຢູ່ຕົວເມືອງພາກໃຕ້ຈີນ,ເຊັ່ນ,ຊຽງໄຮ,ກວາງໂຈ່ວ ແລະ ເສິ່ນເຈິ້ນເປັນຕົ້ນ.

2. ເສດຖະກິດພັດທະນາ: ຄວາມສະດວກດ້ານຄົມມະນາຄົມຊຸກຍູ້ການປະກອບອາຊີບ

ວັນທີ 6 ມັງກອນ ປີ 2015,ຄະນະກຳມະການຮັບອົງຂໍຈັດງານກິລາໂອລິມປິກລະດູໜາວປັກກິ່ງໄດ້ສະເໜີບົດລາຍງານຮັບອົງຂໍຕໍ່ຄະນະກຳມະການໂອລິມປິກສາກົນ, ໂດຍສະເໜີ 3 ທັດສະນະ,ຄື: ຖືນັກກິລາເປັນໃຈກາງ,ພັດທະນາແບບຍືນຍົງ,ແລະ ຈັດງານຢ່າງປະຢັດ.ໃນນັ້ນ,ນັກວິຊາການທີ່ເຂົ້າຮ່ວມການຮ່າງບົດລາຍງານຮັບອົງຂໍນັ້ນກ່າວວ່າ,ບົດລາຍງານຮັບອົງຂໍໄດ້ສຸມໃສ່ການເພີ່ມທະວີຈຳນວນຜູ້ເຂົ້າຮ່ວມລາຍການກິລາ,ຊຸກຍູ້ການພັດທະນາຂອງຕົວເມືອງ,ແລະ ອື່ນໆ,ນີ້ສອດຄ່ອງກັບຂໍ້ສະເໜີຂອງຄະນະກຳມະການໂອລິມປິກສາກົນທີ່ວ່າຈັດງານກິລາໂອລິມປິກເພື່ອສະແຫວງຫາການພັດທະນາແບບຍືນຍົງຂອງຕົນເອງກາຍເປັນຈຸດເດັ່ນອັນໜຶ່ງ.

ເຮັດໃຫ້ງານກິລາໂອລິມປິກກັບຄືນສູ່ຕົວເມືອງ ແລະ ປະຊາຊົນ,ກໍ່ແມ່ນທັດສະນະຢ່າງໜຶ່ງໃນການຈັດງານກິລາໂອລິມປິກລະດູໜາວເທື່ອນີ້.ທ່ານ ຈຽງຊຸ້ຽວອີ ກ່າວວ່າ,“ການຈັດງານກິລາໂອລິມປິກລະດູໜາວຄັ້ງນີ້ຈະເລັ່ງ



ມີຄວາມຄືບໜ້າສະດວກດີໃນການກໍ່ສ້າງທາງລົດໄຟຈາງເຈຍໂຂວ-ຖັງຊານ
张唐铁路施工建设进展顺利



ສະຖານທີ່ກຳເນີດໄຟຟ້າພື້ນຖານ ໂດຍຊັບພະຍາກອນແບບໃໝ່ຂອງບໍລິສັດລົງທຶນຈີນທີ່ເມືອງຊວນຮວານະຄອນຈາງເຈຍ ໂຂວ
张家口市宣化县中电投新能源基地发电场

ລັດການກໍ່ສ້າງພື້ນຖານ ໂຄງລ່າງດ້ານນ້ຳ,ໄຟຟ້າ,ອາຍອຸ່ນ,ອາຍແກັດທຳມະຊາດຢູ່ບໍລິເວນນະຄອນຫຼວງປັກກິ່ງ,ນະຄອນທຽນສິນ ແລະ ແຂວງເຫີເປີຍ,ຊຸກຍູ້ການກໍ່ສ້າງເຄືອຂ່າຍເສັ້ນທາງຄົມມະນາຄົມລະຫວ່າງສອງເຂດ,ເພີ່ມທະວີການເຊື່ອມ ໂຍງເຂົ້າກັນ."ທ່ານກ່າວວ່າ,ຍຸດທະສາດຮ່ວມພັດທະນາຂອງນະຄອນຫຼວງປັກກິ່ງ,ນະຄອນທຽນສິນ ແລະ ແຂວງເຫີເປີຍໄດ້ຍົກຂຶ້ນເປັນຍຸດທະສາດສຳຄັນລະດັບຊາດ,ການເຊື່ອມ ໂຍງເຂົ້າກັນດ້ານຄົມມະນາຄົມຈະເປັນບາດກ້າວໜຶ່ງທີ່ສຳຄັນ.

ປະຈຸບັນ,ທາງລົດໄຟຄວາມໄວສູງລະຫວ່າງປັກກິ່ງກັບຈ່າງເຈ່ຍ ໂຂວທີ່ໄດ້ຄວາມສົນໃຈຫຼາຍນັ້ນໄດ້ລົງມືກໍ່ສ້າງ,ຄາດວ່າຈະສ້າງສຳເລັດໃນປີ 2019.ຮອດເວລານັ້ນ,ເວລາການເດີນທາງລະຫວ່າງສອງຕົວເມືອງຈະຫັນປ່ຽນຈາກ 3 ຊົ່ວ ໂມງປາຍໃນປະຈຸບັນລົງເປັນ 50 ນາທີ;ສະໜາມບິນສາກົນແຫ່ງໃໝ່ຂອງປັກກິ່ງກໍ່ຈະເປີດບໍລິການໃນປີ 2019.ຄົມມະນາຄົມທີ່ສະດວກນອກຈາກຈະຮັບໃຊ້ນັກກິລາບັນດາປະເທດທີ່ຈະມາເຂົ້າຮ່ວມງານກິລາ ໂອລິມປິກລະດູໜາວນັ້ນ,ກໍ່ສ້າງສ້າງ"ວົງເສດຖະກິດ 1 ຊົ່ວ ໂມງ"ລະຫວ່າງປັກກິ່ງກັບຈ່າງເຈ່ຍ ໂຂວ,ຊຸກຍູ້ບໍລິເວນປັກກິ່ງ-ທຽນສິນ-ເຫີເປີຍເສີມຂະຫຍາຍທ່າແຮງແບບຊ່ວຍຊູຍູ້ໜູນກັນ,ຫຼຸດຜ່ອນຄວາມແຕກ ໂຕນກັນດ້ານການພັດທະນາ.

ງານກິລາ ໂອລິມປິກມີບົດບາດອັນໃຫຍ່ຫຼວງຕໍ່ການຊຸກຍູ້ຕົວເມືອງ.ໃນເວລາງານກິລາ ໂອລິມປິກປັກກິ່ງປີ 2008 ປະຕິບັດແຜນການບຸກເບີກຕະຫຼາດນັ້ນ,ໄດ້ສ້າງລາຍຮັບຈາກຕະຫຼາດພາຍໃນປະເທດທີ່ມີມູນຄ່າ 1,2 ຕື້ ໂດລາສະຫະລັດ.ງານກິລາ ໂອລິມປິກລະດູໜາວປີ 2022,ຂະໜາດການຕະຫຼາດ ແລະ ກຳລັງບົ່ມຊ້ອນອັນໃຫຍ່ຫຼວງຈະສ້າງ ໂອກາດພັດທະນາທີ່ໃຫຍ່ກວ່າເກົ່າ."ຖືກິລາເທິງຫິມະ ແລະ ນ້ຳກ້ອນເປັນບ່ອນບຸກທະລຸ,ຈະຊຸກຍູ້ຄວາມຈະເລີນຂອງເສດຖະກິດການທ່ອງທ່ຽວຂອງ 3 ແຫ່ງ,ພ້ອມທັງຊຸກຍູ້ການພັດທະນາຂະແໜງການທ່ອງທ່ຽວຢູ່ເຂດອ້ອມຂ້າງ."ທ່ານ ຈຽງຊ້ຽວອີ ຊີ້ອອກວ່າ,ໂດຍສະເພາະແມ່ນເມືອງຈ່າງເຈ່ຍ ໂຂວ,ຈະເຂົ້າສູ່"ໄລຍະພັດທະນາທອງຄຳ"ທີ່ບໍ່ເຄີຍມີມາກ່ອນໃນດ້ານການຜະລິດຫິມະນ້ຳກ້ອນ,ທຸລະກິດສະໜາມກິລາ,ແລະ ການທ່ອງທ່ຽວແບບພັກຜ່ອນຢ່ອນອາລົມເປັນຕົ້ນ.

3. ປ່ຽນແປງສິ່ງແວດລ້ອມ: ຟ້າໃສເມກຂາວກາຍເປັນສະພາບປົກກະຕິ

ໃນຊຸມປີມໍ່ໆມານີ້,ການໄດ້ຮັບຄວາມນິຍົມຂອງຄຳສັບໃໝ່ຕ່າງໆ,ເຊັ່ນ"ຟ້າໃສໂອລິມປິກ" "ຟ້າໃສ APEC",ໄດ້ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ ແລະ ຄວາມຄອງຄອຍຂອງປະຊາຊົນຕໍ່ຄຸນນະພາບອາກາດຢູ່ນະຄອນຫຼວງປັກກິ່ງ.ທ່ານ ເພີຍກວ່າງຕົ່ງ ເຕັມໄປດ້ວຍຄວາມຄອງຄອຍຕໍ່ງານກິລາ ໂອລິມປິກລະດູໜາວປີ 2022,ທ່ານກ່າວວ່າ,"ຫຼັງຈາກງານກິລາ ໂອລິມປິກ,ຍັງສາມາດຮັກສາຟ້າໃສໂອລິມປິກ,ແລະ ກາຍເປັນສະພາບປົກກະຕິໃນຊີວິດປະຈຳວັນ,ຈຶ່ງຈະເປັນງານກິລາ ໂລລິມປິກສີຂຽວ ແລະ ສະຫງົບສຸກ."

"ນະຄອນຫຼວງປັກກິ່ງໃຫ້ຄວາມສຳຄັນຕໍ່ການບຳບັດມົນລະພິດ,ແຕ່ປີ 1998 ເປັນຕົ້ນມາໄດ້ນຳໃຊ້ມາດຕະການ 200 ກວ່າຢ່າງເພື່ອປັບປຸງປ່ຽນແປງມົນລະພິດທາງອາກາດ,ຄຸນນະພາບອາກາດໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ."ທ່ານ ວາງກວ່າງຊຸ້ນ,ເຈົ້າຄອງນະຄອນຫຼວງປັກກິ່ງທັງເປັນປະທານຄະນະກຳມະການຮັບຮອງຈັດງານກິລາ ໂອລິມປິກລະດູໜາວປັກກິ່ງ 2022 ກ່າວວ່າ,ປີ 2013,ປັກກິ່ງໄດ້ປະຕິບັດແຜນການອະນາໄມອາກາດທີ່ເປັນເວລາ 5 ປີ,ວາງງົບປະມານ 130 ຕື້ ໂດລາສະຫະລັດ,ໃຊ້ 84 ມາດຕະການເພື່ອປັບປຸງການລະບາຍມົນລະພິດຂອງລົດຍົນ,ແລະ ການລະບາຍມົນລະພິດຈາກການຈູດເຜົາຖ່ານຫີນ ແລະ ປັດໄຈອື່ນໆທີ່ກະທົບເຖິງຄຸນນະພາບອາກາດ,ແລະ ໄດ້ຮັບປະສິດທິຜົນອັນພົ້ນເດັ່ນ.ຄົນນັບມື້ນັບຫຼາຍຂຶ້ນໄດ້ເປັນສັກຂີພິຍານໃຫ້ແກ່ການປັບປຸງດີຂຶ້ນຂອງສະພາບແວດລ້ອມຕົວເມືອງຂອງນະຄອນຫຼວງປັກກິ່ງ.



ທາງດ່ວນຈາງເຈຍ ໂຂວ-ເຊີນເຕີແຂວງເຫີເປີຍຄາດວ່າທ້າຍປີນີ້ຈະເປີດແລ່ນລົດໄດ້ຕະຫຼອດທາງ
河北张承高速预计年底全线通车



ຈາງເຈຍ ໂຂວຜະລິດສ້າງກຳບັງນິເວດວິທະຍາປັກກິ່ງ-ທຽນສິນ-ເຫີເປີຍຢ່າງມີປະສິດທິພາບ
张家口打造京津冀生态屏障见成效

图 / 新华社

# "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ຊຸກຍູ້ການໄປມາຫາສູ່ກັນດ້ານເສດຖະກິດການຄ້າລະຫວ່າງອາຊີກັບເອີລົບ

## "一带一路"催热欧亚经贸往来

近日，中国国家主席习近平抵达俄罗斯乌法，出席金砖国家领导人第七次会晤和上海合作组织成员国元首理事会第十五次会议。由于参会的成员国和观察员国有很多都与"一带一路"相关，因此外界普遍认为习主席此次出访将使得"一带一路"战略得以进一步深化，欧亚经济合作也有望再上台阶。专家表示，沿线相关国家拥有丰富的资源、足够的人口、庞大的市场与巨大的增长潜力，"一带一路"战略的推进不仅契合各方共同诉求，更将为整个欧亚大陆开动新的经济增长引擎。

ຫວ່າງມໍ່ໆມານີ້, ທ່ານ ສີຈິ້ນຜິງ, ປະທານປະເທດຈີນ ໄດ້ເດີນທາງໄປຮອດອູຟາຂອງຣັດເຊຍເພື່ອເຂົ້າຮ່ວມງານພົບປະຄັ້ງທີ 7 ຂອງຜູ້ນໍາປະເທດເສດຖະກິດຈະເລີນໃໝ່ ບຼິກສ BRICKS ແລະ ກອງປະຊຸມຄັ້ງທີ 15 ຂອງສະພາປະມຸກລັດປະເທດສະມາຊິກອົງການຮ່ວມມືຊຽງໄຮ. ຍ້ອນວ່າປະເທດສະມາຊິກ ແລະ ປະເທດຜູ້ສັງເກດການທີ່ເຂົ້າຮ່ວມກອງປະຊຸມມີຫຼາຍປະເທດມີສ່ວນພົວພັນກັບ "ໜຶ່ງແລວທາງ ໜຶ່ງເສັ້ນທາງ", ສະນັ້ນວົງການພາຍນອກມີຄວາມເຫັນທົ່ວໄປວ່າການຢ້ຽມຢາມຂອງທ່ານປະທານ ສີຈິ້ນຜິງ ຄັ້ງນີ້ຈະເຮັດໃຫ້ຍຸດທະສາດ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ລົງສູ່ລວງເລິກຕື່ມອີກ, ການຮ່ວມມືດ້ານເສດຖະກິດລະຫວ່າງອາຊີກັບເອີລົບກໍ່ຈະຂຶ້ນສູ່ລະດັບສູງກວ່າເກົ່າ. ຜູ້ຊ່ຽວຊານກ່າວວ່າ, ປະເທດທີ່ກ່ຽວຂ້ອງຕາມ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ມີຊັບພະຍາກອນອຸດົມສົມບູນ, ປະຊາຊົນຢ່າງຫຼວງຫຼາຍ, ຕະຫຼາດກ້ວາງໃຫຍ່ ແລະ ກໍາລັງບົ່ມຊ້ອນເຂັ້ມແຂງ, ການຊຸກຍູ້ຍຸດທະສາດ "ໜຶ່ງແລວທາງ, ໜຶ່ງເສັ້ນທາງ" ບໍ່ພຽງແຕ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຝ່າຍຕ່າງໆເທົ່ານັ້ນ, ຍັງຈະຕິດຫົວຈັກໃໝ່ສໍາລັບການເຕີບໂຕຂອງເສດຖະກິດມະຫາທະວີບອາຊີເອີລົບ.

ດັ່ງນັ້ນ, ເປັນຫຍັງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ຈຶ່ງໄດ້ກາຍເປັນຄໍາສັບອັນສໍາຄັນ ແລະ ຈັງຫວະຕົ້ນຕໍໃນເສດຖະກິດໂລກ? ທ່ານກາບເຢັບ, ນັກຄົ້ນຄວ້າລະດັບສູງຂອງສູນຄົ້ນຄວ້າຄາເນກີຂອງມົດສະກູເຫັນວ່າ, "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ຕົ້ນຕໍແມ່ນອາໄສໂຄງການຮູບປະທໍາ, ເປີດກວ້າງການຮ່ວມມືດ້ານເສດຖະກິດຂອງປະເທດຢູ່ໃນພາກພື້ນນີ້. ນີ້ບໍ່ພຽງແຕ່ມີຜົນດີຕໍ່ການຮ່ວມມືໃນຂົງເຂດວິທະຍາສາດເຕັກໂນໂລຊີສູງ ແລະ ໃໝ່, ຄົມມະນາຄົມ, ແລະ ພື້ນຖານໂຄງລ່າງ, ພ້ອມທັງສອດຄ່ອງກັບຄວາມຕ້ອງການດ້ານການພັດທະນາຮ່ວມຂອງພາກພື້ນທີ່ກ່ຽວຂ້ອງ, ສະນັ້ນຈຶ່ງໄດ້ຮັບຄວາມສົນໃຈຈາກປະເທດສະມາຊິກອົງການຮ່ວມມືຊຽງໄຮ. ທ່ານກາບເຢັບເຫັນວ່າ, "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໄດ້ວາງແຜນການອັນສົດໃສໃຫ້ແກ່ການພັດທະນາຂອງມະຫາທະວີບອາຊີເອີລົບ, ທັງມີບົດບາດຊ່ວຍຊຸກຍູ້ໝູນກັນກັບ "ພັນທະພາບເສດຖະກິດເອີລົບອາຊີ" ທີ່ສະເໜີໂດຍຣັດເຊຍ.

ທ່ານ ຈ່າງສ້ຽວຊຽງ, ຮອງປະທານປະຈໍາສະພາສູນແລກປ່ຽນເສດຖະກິດສາກົນຈີນຊີ້ອອກວ່າ, "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ສອດທ້ອຍເອົາມະຫາທະວີບອາຊີ ແລະ ເອີລົບ, ຢູ່ເບື້ອງໜຶ່ງແມ່ນວົງເສດຖະກິດອາຊີຕາເວັນອອກທີ່ຟົດຟື້ນ, ໃນອີກເບື້ອງໜຶ່ງແມ່ນວົງເສດຖະກິດເອີລົບທີ່ພັດທະນາແລ້ວ, ຮ່ວມມືກັນສ້າງສາແລວທາງເສດຖະກິດທີ່ເຊື່ອມຈອດສອງແລວ (ແຖບ) ເສດຖະກິດອັນສໍາຄັນຂອງໂລກນີ້ທີ່ມີປະຊາກອນຫຼາຍທີ່ສຸດ, ເນື້ອທີ່ອັນກວ້າງຂວາງ ແລະ ມີຊັບພະຍາກອນຢ່າງອຸດົມສົມບູນນັ້ນ, ສາມາດເສີມຂະຫຍາຍທ່າແຮງພິເສດ, ກໍາລັງບົ່ມຊ້ອນອັນໃຫຍ່ຫຼວງຂອງປະເທດຕ່າງໆຕາມແລວທາງ, ປາກົດເປັນສະພາບການພັດທະນາໃໝ່ທີ່ເປັນຮູບໂຕ H ເຊິ່ງຈະເສີມຂະຫຍາຍບົດບາດອັນຕັ້ງໜ້າ ແລະ ໃຫຍ່ຫຼວງຕໍ່ການພັດທະນາຂອງປະເທດຕາມແລວທາງກໍ່ຄືທົ່ວໂລກ.

ໃນດ້ານໜຶ່ງ, ພື້ນຖານໂຄງລ່າງຫຼ້າຫຼັງ, ຂາດເຂີນພະລັງງານ, ຄົມມະນາຄົມບໍ່ສະດວກເປັນສິ່ງກີດຂວາງການເຄື່ອນໄຫວຂອງປັດໄຈຕ່າງໆ, ແລະ ກໍລະນີອື່ນໆໄດ້ຜູກມັດບາດກ້າວຂອງຫຼາຍປະເທດອາຊີທີ່ສະແຫວງຫາການພັດທະນາ; ໃນອີກດ້ານໜຶ່ງ, ປະເທດຈີນມີທ່າແຮງຫຼາຍສົມຄວນໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ຜະລິດເຄື່ອງຈັກລະດັບສູງ, ພ້ອມທັງມີຕະຫຼາດຄວາມຕ້ອງການພາຍໃນອັນໃຫຍ່ຫຼວງ. ຊ່ຽວຊານຫຼາຍຄົນຄາດວ່າ, ປະເທດຕ່າງໆຕາມແລວທາງມີໂອກາດອັນກວ້າງຂວາງໃນຂົງເຂດຕ່າງໆ, ເຊັ່ນ, ບໍ່ແຮ່, ນັກວິຊາການ, ເຕັກໂນໂລຊີ, ນໍ້າ, ປ່າໄມ້, ພະລັງງານ, ແລະ ການບໍລິໂພກເປັນຕົ້ນ ເຊິ່ງຈະເປັນພະລັງແຮງຖາວອນທີ່ຊຸກຍູ້ການພັດທະນາຂອງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ".

ມູນຄ່າການຄ້າລະຫວ່າງຈີນກັບປະເທດຕ່າງໆໃນພາກພື້ນ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໄດ້ກວມ 1/4 ຂອງຍອດມູນຄ່າການຄ້າກັບຕ່າງປະເທດຂອງຈີນໃນໄລຍະດຽວກັນ, ນີ້ສະແດງໃຫ້ເຫັນເຖິງຄວາມຄືບໜ້າອັນໃຫຍ່ຫຼວງແຕ່ການປະຕິບັດຍຸດທະສາດ "ໜຶ່ງແລວທາງ ໜຶ່ງເສັ້ນທາງ", ພ້ອມທັງສະແດງໃຫ້ເຫັນເຖິງກໍາລັງບົ່ມຊ້ອນອັນໃຫຍ່ຫຼວງສໍາລັບການພັດທະນາດ້ານຕ່າງໆໃນອະນາຄົດ.




ຂະບວນຕູ້ລົດໄຟຈີນ-ເອີຣົບໂດຍກົງ "ທ່າອິນໂຂວ—ສະໂລວາກີ•ໂດບຸລາ" ໄດ້ແລ່ນລົດຢ່າງເປັນທາງການ

"营口港——斯洛伐克·多布拉"中欧国际直达班列正式运行

文／楚然　图／CFP

# ທ່າເຕົ້າເຫລຽນ

## 大连港

大连港位于辽东半岛南端的大连湾内，始建于 1899 年，距今已有百余年的历史。它是东北亚经济圈的中心，是该区域进入太平洋，面向世界的海上门户。港口港阔水深，冬季不冻。自然条件非常优越，是转运远东、南亚、北美、欧洲货物最便捷的港口。

ທ່າຕ້າຫຼຽນຕັ້ງຢູ່ໃນອ່າວຕ້າຫຼຽນທາງພາກໃຕ້ຂອງແຫຼມຫຼຽວຕົ່ງ,ສ້າງຂຶ້ນໃນປີ 1899,ຮອດປະຈຸບັນມີປະຫວັດສາດ 100 ກວ່າປີແລ້ວ.ທ່າຕ້າລຽນເປັນໃຈກາງຂອງວົງເສດຖະກິດອາຊີຕາເວັນອອກສຽງເໜືອ,ແມ່ນທາງອອກທາງທະເລທີ່ພາກພື້ນນີ້ເຂົ້າສູ່ມະຫາສະໝຸດປາຊີຟິກ ແລະ ອວ່າຍໜ້າສູ່ໂລກ.ທ່າຕ້າຫຼຽນມີເນື້ອທີ່ກວ້າງຂວາງ ແລະ ນ້ຳເລິກ,ໃນລະດູໜາວຈະບໍ່ກາຍເປັນນ້ຳກ້າມ.ມີເງື່ອນໄຂທຳມະຊາດທີ່ດີເລີດ,ແມ່ນທ່າກຳປັ່ນທີ່ສະດວກວ່ອງໄວທີ່ສຸດສຳລັບການສົ່ງຕໍ່ສິນຄ້າຂອງຕາເວັນອອກໄກ,ອາຊີໃຕ້,ອາເມລິກາເໜືອ ແລະ ເອີລົບ.

ເດືອນ ເມສາ ປີ 2003,ກຸ່ມບໍລິສັດທ່າຕ້າຫຼຽນສ້າງຕັ້ງຂຶ້ນ,ກຸ່ມບໍລິສັດທ່າຕ້າຫຼຽນເປັນຜູ້ສືບທອດຍີ່ຫໍ້ທ່າຕ້າລຽນທີ່ມີປະຫວັດມາເປັນເວລາຮ້ອຍກວ່າປີ,ແມ່ນວິສາຫະກິດທ່າກຳປັ່ນຂະໜາດໃຫຍ່ທີ່ສຸດຂອງນະຄອນຕ້າລຽນກໍ່ຄືແຂວງລຽວນີງ,ເປັນທ່າກຳປັ່ນອັນສຳຄັນໃນສູນຂົນສົ່ງທາງທະເລສາກົນອາຊີຕາເວັນອອກສຽງເໜືອຕ້າລຽນທີ່ກຳລັງກໍ່ສ້າງຢູ່. ປີ 2013,ປະລິມານຂົນຖ່າຍສິນຄ້າຢູ່ທ່າຕ້າລຽນໄດ້ຫຼາຍກວ່າ 400 ລ້ານໂຕນເຊິ່ງເຂົ້າສູ່ 10 ອັນດັບທຳອິດຂອງທ່າກຳປັ່ນໂລກ,ແລະ ຂົນຖ່າຍຕູ້ຄອນເທັນເນີ 10 ລ້ານຕູ້,ເຊິ່ງຢູ່ 20 ອັນດັບທຳອິດຂອງໂລກ.

ຄຽງຄູ່ກັບການກໍ່ສ້າງສູນຂົນສົ່ງທາງທະເລສາກົນອາຊີຕາເວັນອອກສຽງເໜືອຕ້າຫຼຽນ ແລະ ການພັດທະນາແລວເສດຖະກິດແຄມທະເລຫຼຽວນີງຂຶ້ນເປັນຍຸດທະສາດລະດັບຊາດ,ກຸ່ມບໍລິສັດທ່າຕ້າຫຼຽນໄດ້ປາກົດມີທ່າອ່ຽງພັດທະນາຢ່າງວ່ອງໄວ.ປະຈຸບັນໄດ້ມີບ່ອນຈອດສະເພາະແບບທັນສະໄໝ 100 ກວ່າບ່ອນ,ເຊັ່ນ,ຕູ້ຄອນເທັນເນີ,ນ້ຳມັນດິບ,ນ້ຳມັນສຳເລັດຮູບ,ຫີນແຮ່,ທັນຍາຫານ,ຖ່ານຫີນ ແລະ ລົດບັນທຸກເປັນຕົ້ນ,ມີບ່ອນຈອດຂະໜາດໝື່ນໂຕນຂຶ້ນໄປ 70 ກວ່າບ່ອນ,ເວົ້າໄດ້ວ່າໃນໂລກນີ້ມີກຳປັ່ນໃຫຍ່ປານໃດ,ຢູ່ທ່າຕ້າລຽນກໍ່ມີທ່າບ່ອນຈອດສຳລັບກຳປັ່ນໃຫຍ່ຊໍ່ານັ້ນ.

ປະຈຸບັນ,ກຸ່ມບໍລິສັດໄດ້ສ້າງສາຍພົວພັນໄປມາຫາສູ່ກັນດ້ານການຂົນສົ່ງທາງທະເລກັບທ່າກຳປັ່ນ 300 ກວ່າແຫ່ງຂອງ 160 ກວ່າປະເທດ ແລະ ເຂດແຄວ້ນຂອງໂລກ,ໄດ້ເປີດເສັ້ນທາງຂົນສົ່ງທາງທະເລສາກົນດ້ວຍຕູ້ຄອນເທັນເນີ 75 ສາຍເຊິ່ງເປັນໜຶ່ງໃນທ່າກຳປັ່ນຂົນສົ່ງຕູ້ຄອນເທັນເນີຕາມເສັ້ນທາງລົດໄຟ-ທາງທະເລ ແລະ ການສົ່ງຕໍ່ທາງທະເລທີ່ສຳຄັນຂອງຈີນ.ທ່າຕ້າລຽນມີທ່າກຳປັ່ນນ້ຳມັນດິບຂະໜາດ 3 ແສນໂຕນ,ແລະ ທ່າກຳປັ່ນຫີນແຮ່ຂະໜາດ 3 ແສນ 5 ໝື່ນໂຕນທີ່ເປັນຂະໜາດໃຫຍ່ທີ່ສຸດ ແລະ ທັນສະໄໝທີ່ສຸດຂອງຈີນ,ທັງມີທ່າກຳປັ່ນລົດຍົນແບບອາຊີບ.ທ່າກຳປັ່ນຂົນຖ່າຍທັນຍາຫານຂອງກຸ່ມບໍລິສັດທ່າຕ້າລຽນໄດ້ຜ່ານຈາກສ້າງລະບົບຈໍລະຈອນສິນຄ້າຢ່າງຄົບຖ້ວນ,ຄືແຫຼ່ງຜະລິດ,ເສັ້ນທາງລົດໄຟ,ທ່າກຳປັ່ນ,ເສັ້ນທາງຂົນສົ່ງທາງທະເລ ແລະ ຕະຫຼາດຈຳໜ່າຍເປັນເອກະພາບດຽວກັນນັ້ນ,ພວມກາຍເປັນສູນສົ່ງຕໍ່ທັນຍາຫານທີ່ມີກຳລັງແຂ່ງຂັນທີ່ເຂັ້ມແຂງທີ່ສຸດຢູ່ພາກຕາເວັນອອກສຽງເໜືອຂອງຈີນ.ທ່າກຳປັ່ນຂົນສົ່ງໂດຍສານໄດ້ເປີດເສັ້ນທາງຂົນສົ່ງໂດຍສານພາຍໃນປະເທດ,ເຊັ່ນ,ຈາກຕ້າລຽນຮອດຢ່ຽນໄທ,ເວີຍໄຫ,ເຜິງໄລ,ຕົ່ງຢີງ,ທຽນສິນ,ໝູ່ເກາະຂອງເມືອງຊາງໄຫເປັນຕົ້ນ,ແລະເສັ້ນທາງຂົນສົ່ງໂດຍສານສາກົນ,ຄືຈາກຕ້າລຽນຮອດອິນຊອນຂອງ ສ.ເກົາຫຼີ.ຂະໜາດບໍລິການຂົນສົ່ງໂດຍສານຄອງອັນດັບໜຶ່ງຢູ່ທ່າກຳປັ່ນຕ່າງໆເຂດແຄມທະເລທົ່ວປະເທດຈີນເປັນເວລາດົນນານ.

ໃນການດຳເນີນທຸລະກິດເປັນເວລາຫຼາຍປີຜ່ານມານັ້ນ,ກຸ່ມບໍລິສັດທ່າຕ້າລຽນໄດ້ສ້າງສາຍພົວພັນການຮ່ວມມືຍຸດທະສາດໄລຍະຍາວກັບວິສາຫະກິດທີ່ດີເດັ່ນທັງພາຍໃນ ແລະ ຕ່າງປະເທດ,ເຊັ່ນ: ກຸ່ມບໍລິສັດນ້ຳມັນເຊື້ອໄຟຈີນ,ກຸ່ມບໍລິສັດຂົນສົ່ງທາງທະເລໄກ,ບໍລິສັດຂົນສົ່ງຕູ້ຄອນເທັນເນີຈົ່ງໄຫ,ບໍລິສັດ A.P. Moller - Maersk A/S, ບໍລິສັດທ່າກຳປັ່ນສາກົນສິງກະໂປ, Rio Tinto Group, ບໍລິສັດ NYK ຂອງຍີ່ປຸ່ນ,ບໍລິສັດ Odfjell ຂອງນອກແວ,ບໍລິສັດເຫຼັກກ້າອ່ານຊ່ານ,ແລະ ກຸ່ມບໍລິສັດເປີນຊີ່ເປັນຕົ້ນ.



图 / 新华社

# ການຕ່າງປະເທດດ້ານການທ່ອງທ່ຽວ,ເລົ່າເລື່ອງຈີນດ້ວຍຫຼາຍຮູບແບບ

## 旅游外交，立体讲述中国故事

伴随改革开放 30 多年的发展，中国旅游业从无到有、从弱到强，已不单单是游山玩水、休闲怡情，更是在外交、经济、人文等国家间合作中发挥着独特优势。

ວັນທີ 4 ກໍລະກົດ ປີ 2015,ໂດຍຕອບສະໜອງຕາມຄຳເຊີນຂອງເຈົ້າຊີວິດຕູປູ 6 (Aho eitu Unuaki otonga Tuku aho)ຂອງປະເທດຕົງກາ,ທ່ານ ລີຈິ່ນຈາວ,ຫົວໜ້າກົມທ່ອງທ່ຽວແຫ່ງຊາດຈີນໃນນາມເປັນທູດພິເສດຂອງທ່ານ ສີຈິ້ນຜິງ,ປະທານປະເທດຈີນໄດ້ເຂົ້າຮ່ວມພິທີສວມລາຊະມົງກຸດຂອງເຈົ້າຊີວິດຕູປູ 6.ນີ້ແມ່ນຫົວໜ້າກົມທ່ອງທ່ຽວແຫ່ງຊາດໄປຢ້ຽມຢາມຕ່າງປະເທດໃນຖານະເປັນທູດພິເສດຂອງປະທານປະເທດເປັນຄັ້ງທຳອິດ. ເຫດການດັ່ງກ່າວສະແດງໃຫ້ເຫັນອີກເທື່ອໜຶ່ງວ່າ,ການທ່ອງທ່ຽວບໍ່ພຽງແຕ່ເປັນການທ່ຽວຫຼິ້ນເທົ່ານັ້ນອີກແລ້ວ,ຫາກໄດ້ເສີມຂະຫຍາຍບົດບາດນັບມື້ນັບສຳຄັນກວ່າເກົ່າໃນເວທີສາກົນ.

ການທ່ອງທ່ຽວເປີດປະຕູໃຫ້ກວ້າງອອກແລກປ່ຽນກັນໃນຫຼາຍຂົງເຂດ



ພິທີລິເລີ່ມ "ປະເທດຈີນທີ່ສວຍງາມ—ປີທ່ອງທ່ຽວເສັ້ນທາງສາຍໄໝປີ 2015 "ໄດ້ຈັດຂຶ້ນທີ່ຊີອານ

"美丽中国——2015 丝绸之路旅游年" 启动仪式在西安举行

ການຮ່ວມມືລະຫວ່າງປະເທດພົວພັນເຖິງຫຼາຍລະດັບ ແລະ ຫຼາຍຂົງເຂດ,ເປັນຫຍັງເທື່ອນີ້ຜູ້ຮັບຜິດຊອບພາກສ່ວນບໍລິຫານການທ່ອງທ່ຽວໄດ້ຮັບມອບໝາຍໜ້າທີ່ອັນສຳຄັນ ແລະ ຂຶ້ນສູ່ແນວໜ້າຂອງເວທີການຕ່າງປະເທດ? ສາຍເຫດແມ່ນຍ້ອນວ່າ,ການຮ່ວມມືດ້ານການທ່ອງທ່ຽວແມ່ນຂົງເຂດການຮ່ວມມືລະຫວ່າງຈີນກັບຕ່າງປະເທດທີ່ມີຄວາມຮັບຮູ້ຄືກັນຫຼາຍທີ່ສຸດ ແລະ ບັງເກີດຜົນໄວທີ່ສຸດ.ຄຽງຄູ່ກັບການປະຕິຮູບແລະໄຂປະຕູສູ່ພາຍນອກເປັນເວລາ 30 ກວ່າປີມານີ້,ການທ່ອງທ່ຽວຈີນຈາກບໍ່ມີຮອດມີ,ຈາກຄວາມອ່ອນແອຮອດຄວາມເຂັ້ມແຂງ,ແມ່ນບໍ່ພຽງແຕ່ການທ່ຽວຫຼິ້ນພູຜາແມ່ນ້ຳ,ພັກຜ່ອນຢ່ອນໃຈເທົ່ານັ້ນ,ຍິ່ງໄດ້ເສີມຂະຫຍາຍບົດບາດອັນພິເສດໃນການຮ່ວມມືດ້ານການຕ່າງປະເທດ,ເສດຖະກິດ ແລະ ວັດທະນະທຳກັບປະເທດຕ່າງໆ.

ຕົງກາເປັນປະເທດເກາະດອນຢູ່ພາກໃຕ້ຂອງມະຫາສະໝຸດປາຊີຟິກ,ມີຊັບພະຍາກອນການທ່ອງທ່ຽວຢ່າງອຸດົມສົມບູນ,ການທ່ອງທ່ຽວເປັນຂະແໜງການເສົາຄ້ຳຂອງຕົງກາ,ເຂົາເຈົ້າຍິນດີຕ້ອນຮັບນັກທ່ອງທ່ຽວຈີນ. ການທ່ອງທ່ຽວເກາະດອນທະເລ ແລະ ທ່ອງທ່ຽວແບບລະອຽດໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວຈີນຈຳນວນຫຼວງຫຼາຍ,ສຳລັບປະເທດຕົງກາກໍ່ມີທ່າແຮງບົ່ມຊ້ອນໃນດ້ານນີ້,ການທ່ອງທ່ຽວແມ່ນຂົງເຂດທີ່ເໝາະສົມສຳລັບການຮ່ວມມືໃນລະດັບເລິກເຊິ່ງລະຫວ່າງສອງປະເທດຈີນກັບຕົງກາ.ໃນໄລຍະຢ້ຽມຢາມຕົງກາ,ທ່ານ ລີຈິ່ນຈາວໄດ້ພົບປະກັບຜູ້ນຳຕົງກາ,ຕາງໜ້າກົມທ່ອງທ່ຽວແຫ່ງຊາດຈີນເຊັນບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືດ້ານການທ່ອງທ່ຽວລະຫວ່າງຈີນກັບຕົງກາກັບພາກສ່ວນທ່ອງທ່ຽວຂອງຕົງກາ,ສອງຝ່າຍຈະດຳເນີນການຮ່ວມມືໃນຂົງເຂດຕ່າງໆ,ເຊັ່ນ,ແລກປ່ຽນຂໍ້ມູນຂ່າວສານ,ເປີດກວ້າງຕະຫຼາດ,ຮ່ວມມືດ້ານວິຊາການ,ອົບຮົມບຸກຄະລາກອນ,ແລະ ຮ່ວມມືພາຍໃຕ້ຂອບອົງການຈັດຕັ້ງສາກົນ.ນອກນີ້,ກົມທ່ອງທ່ຽວແຫ່ງຊາດຈີນຍັງຈະຈັດຕັ້ງນັກທຸລະກິດຂະແໜງການທ່ອງທ່ຽວຮ້ອຍທ່ານໄປທ່ອງທ່ຽວ ແລະ ແລກປ່ຽນຢູ່ຕົງກາ,ສ້າງໂອກາດຫຼາຍກວ່າເກົ່າໃຫ້ແກ່ການພັດທະນາຂະແໜງການທ່ອງທ່ຽວຂອງທັງສອງຝ່າຍ.

ການທ່ອງທ່ຽວຊຸກຍູ້ພັດທະນາເສດຖະກິດການບໍລິໂພກສ້າງຜົນປະໂຫຍດໃຫ້ແກ່ຊີວິດການເປັນຢູ່ຂອງປະຊາຊົນ

ປະຖົມປັດໄຈທີ່ການຕ່າງປະເທດດ້ານການທ່ອງທ່ຽວຂຶ້ນສູ່ເວທີສາກົນແມ່ນການພັດທະນາອັນໃຫຍ່ຫຼວງຂອງຂະແໜງການທ່ອງທ່ຽວ.ເມື່ອຫວນຄືນເຖິງ 35 ປີທີ່ຜ່ານມາ,ຂະແໜງການທ່ອງທ່ຽວຈີນໄດ້ມີການພັດທະນາແບບກ້າວກະໂດດທີ່ຫັນຈາກປະເທດທີ່ພວມພັດທະນາທີ່ເປັນການທ່ອງທ່ຽວແບບກຸ່ມຄົນໜ້ອຍມາເປັນປະເທດໃຫຍ່ດ້ານການທ່ອງທ່ຽວແບບຈະເລີນເຕີບໂຕໃນຂັ້ນເບື້ອງຕົ້ນ.ຂະແໜງການທ່ອງທ່ຽວໄດ້ກາຍເປັນຜະລິດຕະກຳທັນສະໄໝແບບສັງລວມ,ປະກອບສ່ວນເຂົ້າໃນຂະແໜງການທີ່ກ່ຽວຂ້ອງເພີ່ມຂຶ້ນຢ່າງຫຼວງຫຼາຍ,ນີ້ຢືນຢັນເຖິງປະຊາຊົນຮັ່ງມີຂຶ້ນ,ປະເທດເຂັ້ມແຂງ ແລະ ການທ່ອງທ່ຽວໄດ້ຮັບການພັດທະນາ,ກໍ່ຢືນຢັນເຖິງທ່າແຮງດ້ານບົດບາດສັງລວມຂອງເສດຖະກິດການທ່ອງທ່ຽວ.



ຕົວເມືອງນ້ອຍເກີເຕີແຮດຮົງກາລີ,ແຂກທ່ອງທ່ຽວຈີນຢ້ຽມຊົມພະລາຊະວັງຂອງເຈົ້າຍິງຊີຊີທີ່ດຳລົງຊີວິດຢູ່ນັ້ນ

匈牙利小城格德勒，中国游客参观茜茜公主生活过的王宫

ນັກທ່ອງທ່ຽວຈີນມີກຳລັງຊື້ສິນຄ້າທີ່ເຂັ້ມແຂງ,ທັງມີການບັນທຶກເຂົ້າອອກເມືອງທີ່ນັບມື້ນັບດີຂຶ້ນ,ມີຄວາມໜ້າເຊື່ອຖືນັບມື້ນັບສູງຂຶ້ນໃນສາກົນ.ໂດຍສະເພາະໃນ 2 ປີຜ່ານມາ,ອາເມລິກາ,ອົສຕຼາລີ, ຍີ່ປຸ່ນ,ຝຣັ່ງ,ອັງກິດ ແລະ ອື່ນໆໄດ້ພາກັນອອກຂ່າວດີດ້ານວີຊາສຳລັບນັກທ່ອງທ່ຽວຈີນ,ໜັງສືຜ່ານແດນຂອງຈີນມີບົດບາດສູງຂຶ້ນເລື້ອຍໆ,ຊາວຈີນພວມບັນລຸຄວາມມຸ່ງຫວັງຕາມແບບທີ່ວ່າ "ເດີນທາງໄປທ່ອງທ່ຽວຕາມໃຈມັກ".

ການທ່ອງທ່ຽວສາກົນໄດ້ຊຸກຍູ້ພັດທະນາຫຼາຍຂົງເຂດເສດຖະກິດ,ເຊັ່ນ,ຄົມມະນາຄົມ,ການຄ້າ,ແລະ ການທະນາຄານເປັນຕົ້ນ.ທ່ານ ລີຈິ່ນຈາວ ກ່າວວ່າ,"ຄຽງຄູ່ກັບບາດກ້າວຂອງນັກທ່ອງທ່ຽວຈີນກ້າວສູ່ທຸກມຸມຂອງໂລກ,ການແລກປ່ຽນດ້ານການທ່ອງທ່ຽວລະຫວ່າງຈີນກັບປະເທດຕ່າງໆໃນໂລກນັບມື້ນັບຟົດຟື້ນຂຶ້ນ.ໂລກບໍ່ເຄີຍມີສະພາບການຄືຊູ່ມື້ນີ້,ໃຊ້ສາຍຕາທີ່ເອົາໃຈໃສ່,ແລະ ຈິດໃຈທີ່ສັບສົນຄືແນວນີ້ມາພິຈາລະນາ ແລະ ຊອກຮູ້ບົດບາດຂອງຈີນທີ່ນຳມາຈາກການທ່ອງທ່ຽວຂອງຈີນ."

ການທ່ອງທ່ຽວຈີນຄວນເປີດກວ້າງການຕ່າງປະ




ເຊອຸນ ສ.ເກົາຫລີ, ໃນຖະໜົນເຂດຊອບປິ້ງໝີງຕົ໋ງຕິດຫ້ອຍໄວ້ປ້າຍຄຳຂວັນທີ່ວ່າ "ຍິນດີຕ້ອນຮັບທ່ານທີ່ມາຢ້ຽມຢາມໝີງຕົ໋ງ" ແລະ "ຂໍອວຍໄຊໃຫ້ພວກທ່ານໂຊກດີປີໃໝ່,ຮັ່ງມີລໍ່າລວຍ" ແລະ ອື່ນໆ
韩国首尔，明洞购物区的街道上挂出“欢迎您访问明洞”和“新年快乐，恭喜发财”等字样的条幅

ເທດດ້ານການທ່ອງທ່ຽວເລື້ອຍໆ,ຮັບໃຊ້ວຽກງານການຕ່າງປະເທດຂອງລັດ,ຖື "ການກ້າວສູ່ພາຍນອກ"ຂອງບຸກຄະລາກອນເປັນສິ່ງນຳໜ້າ,ເພື່ອຊຸກຍູ້ການລົງທຶນຕໍ່ຕ່າງປະເທດ,ການສົ່ງອອກສິນຄ້າ,ເຕັກໂນໂລຊີ ແລະ ການບໍລິການ,ຊຸກຍູ້ໃຫ້ການທ່ອງທ່ຽວກາຍເປັນຈຸດເຕີບໂຕໃໝ່ໃນການພັດທະນາແບບທັນເປັນສາກົນ,ສະແດງໃຫ້ເຫັນທ່າແຮງດ້ານບົດບາດສັງລວມຂອງການທ່ອງທ່ຽວຢ່າງຮອບດ້ານ,ເຮັດໃຫ້ຂະແໜງການທ່ອງທ່ຽວກາຍເປັນຫົວຈັກໃໝ່ສຳລັບການເຕີບໂຕຂອງເສດຖະກິດຈີນ.

ການທ່ອງທ່ຽວເຮັດໃຫ້ຈິດໃຈປະຊາຊົນໃກ້ຊິດເຂົ້າການໄປມາຫາສູ່ກັນເພີ່ມທະວີມິດຕະພາບ

ໃນຊຸມປີມໍ່ໆມານີ້,ຈີນກັບຣັດເຊຍ,ອິນເດຍ ແລະ ສ.ເກົາຫຼີໄດ້ຈັດກິດຈະກຳປີທ່ອງທ່ຽວເຊິ່ງກັນ ແລະ ກັນ,ໄດ້ຊຸກຍູ້ຄວາມເຂົ້າໃຈ ແລະ ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນລະຫວ່າງປະຊາຊົນ,ເປີດກວ້າງການໄປມາຫາສູ່ກັນດ້ານເສດຖະກິດການທ່ອງທ່ຽວ,ປະກອບສ່ວນອັນຕັ້ງໜ້າເຂົ້າໃນການຂະຫຍາຍສາຍພົວພັນຈີນ-ຣັດເຊຍ, ຈີນ-ອິນເດຍ ແລະ ຈີນ-ສ.ເກົາຫຼີ.

ພຶດຕິກຳທັງພາຍໃນ ແລະ ຕ່າງປະເທດສະແດງໃຫ້ເຫັນວ່າ,ການຕ່າງປະເທດດ້ານການທ່ອງທ່ຽວມີຄວາມຄ່ອງແຄ້ວດີ,ແລະ ຝັງເລິກຢູ່ໃນປະຊາຊົນ.ໃນໄລຍະທີ່ສາຍພົວພັນສອງຝ່າຍເປັນຢ່າງດີ,ການທ່ອງທ່ຽວສາມາດເລັ່ງລັດຂະຫຍາຍສາຍພົວພັນລະຫວ່າງສອງຝ່າຍ; ໃນໄລຍະທີ່ສາຍພົວພັນສອງຝ່າຍພົບກັບຄວາມຫຍຸ້ງຍາກ, ການທ່ອງທ່ຽວສາມາດກາຍເປັນສິ່ງຊ່ວຍປັບປຸງສາຍພົວພັນລະຫວ່າງຊາດ;ໃນໄລຍະທີ່ສອງຝ່າຍຍັງບໍ່ທັນສ້າງສາຍສຳພັນທາງການທູດ,ສາມາດຈັດໃຫ້ມີການໄປມາຫາສູ່ກັນດ້ານການທ່ອງທ່ຽວກ່ອນ,ເຮັດໃຫ້ການໄປມາຫາສູ່ກັນຂອງປະຊາຊົນກາຍເປັນຈັກນຳທາງທີ່ເຮັດໃຫ້ສາຍພົວພັນລະຫວ່າງຊາດທັນເປັນປົກກະຕິ.

ປະເທດຈີນມີສະພາບການຄືແນວໃດ? ຊາວຈີນທຸກຄົນທີ່ໄປທ່ອງທ່ຽວຕ່າງປະເທດກໍ່ເປັນທູດທີ່ດີທີ່ສຸດ.ເລື່ອງທີ່ນັກທ່ອງທ່ຽວຈີນຊ່ວຍກູ້ຊີວິດຄົນຢູ່ອາເມລິກາ,ໄດ້ຮັບຄວາມຍ້ອງຍໍຈາກຄົນອາເມລິກາ,ໄດ້ສ້າງພາບພົດ"ນັກທ່ອງທ່ຽວຄົນດີ"ຢູ່ໃນໂລກ.ການທ່ອງທ່ຽວໄດ້ກາຍເປັນເວທີອັນສຳຄັນທີ່ພວກເຮົາສົ່ງສຽງຈີນ,ເລົ່າເລື່ອງຂອງຈີນ ແລະ ເພີ່ມທະວີການພົວພັນກັບໂລກ.ນັກທ່ອງທ່ຽວຈີນເໝືອນກັບໄດ້ເປີດປ່ອງຢ້ຽມໂດຍກົງຢູ່ປະເທດຈຸດໝາຍປາຍທາງແຫ່ງການທ່ອງທ່ຽວ,ສາມາດເຮັດໃຫ້ຄົນຕ່າງປະເທດຮັບຮູ້ນະໂຍບາຍ,ສະພາບການ ແລະ ຊີວິດການເປັນຢູ່ຂອງປະຊາຊົນໂດຍກົງ ແລະ ມີຊີວິດຊີວາ.ການທ່ອງທ່ຽວກັບການຕ່າງປະເທດເຊື່ອມໂຍງເຂົ້າກັນ,ມີຜົນດີຕໍ່ການສ້າງຮູບການສື່ສານທີ່ມີຫຼາຍຊ່ອງທາງ ແລະ ຫຼາຍທິດທາງ,ມີຜົນດີສຳລັບການພັນລະນາພາບພົດທີ່ດີງາມຂອງຈີນຕໍ່ຊາວໂລກ.




ບໍລິສັດລາວເຈແລ່ນເຈີຈຳກັດ

老挝成捷企业有限公司









ທ່ານ ຮວງ ຈິນຜູ ປະທານບໍລິສັດ
黄金浦 董事长

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882

ທີ່ຢູ່:ຫຼັກ 8ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882












## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈຳກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈຳກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊຳລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສຳນັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍີວູ, ເມືອງນານນີງ, ເມືອງພິງຊຽງ, ເມືອງຄຸນໝີງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່າວຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມ ໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ປ່ຽນເປັນ 4 ມື້ ແລະ ສຳຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກຳໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຂຸດຄົ້ນແຮ່ທາດແລະອື່ນໆ.ຫອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້
-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກກວາງໂຈວຈີນຫາວຽງຈັນລາວໂດຍຜ່ານບາງກອກ
-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965
ໂທລະສັບລາວ: 020 98000013
ພາສາລາວ: 020 98209598
EMAIL: ocean@transgz.com
ເວບໄຊ:www.transgz.com



广州共成运输代理有限公司
中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：

——中国广州到老挝万象4天汽车快运

——中国广州经曼谷到万象的海陆联运服务

——老挝出口到中国等国家的物流服务

中国热线：86 20 36517965
老挝热线：020-98000013
老挝文： 020-28140016
EMAIL:ocean@transgz.com
网址：www.transgz.com




伴语私塾
汉语就是这样练成的!

BanYu Chinese Home School
That is how you practise Chinese!

# Schedule one FREE TRIAL LESSON (30 minutes) as you like!

> One-on-one online lesson
> One-on-one face-to-face lesson
> Small-class lesson

**You have FREE access to:**

- *professional native Chinese teachers;*
- *10-15 new Chinese words and phrases;*
- *3-5 real Chinese sentence patterns;*
- *1-2 Chinese idioms and proverbs;*
- *standard mandarin pronunciation training;*
- *more useful Chinese expressions for communication;*

***Business Chinese, Daily Chinese, Chinese Test Prep Course, Chinese Culture Course…***

Get more Chinese lesson information at **edu.cri.cn!**
Contact us: **400-8787-451**



# 《占芭》老挝全国广告招商总代理
## ——LAO FUTURE 传媒公司

扫一扫，掌握老挝最新资讯

ຍິນດີຕ້ອນຮັບຂໍເຊີນທຸກໆທ່ານມາລົງໂຄສະນານຳພວກເຮົາ

ພວກເຮົາເນັ້ນໃສ່ສ່ວນຫລາຍແມ່ນດ້ານການເສດຖະກິດ, ການເມືອງ,ການສຶກສາ,ວັດທະນາທຳ,ການທ່ອງທ່ຽວ ແລະ ອື່ນໆ

老挝资讯网

www.360laos.com 搜索一下

商务服务 | 二手买卖 | 吃喝玩乐 | 人才招聘

www.360laos.com

新闻资讯 | 政策法规 | 招标投资 | 风土民情




图 / 半 清

# ພູຊີ່ສານເມືອງຄຸນມິງ ກ້າວເຂົ້າສູ່ເສັ້ນທາງນິເວດສີຂຽວ

昆明西山　迈步绿色生态路

如今的昆明西山，每到周末和节假日，湿地公园已成为当地市民及游客的好去处，在感受高原湖泊靓丽的同时还可以与野鸭、白鹭等水鸟邂逅。

自 2008 年以来，西山区在滇池湖滨带范围内通过“退塘还湿、退田还林”开展湖滨生态带建设，至今，共建成包括环湖湿地、湖滨林在内的环湖生态带 21778 亩。西山区如今已经形成了“半城山水半城湖、半城春色半城梦”的山水园林新城区。

ຢູ່ເຂດຊີ່ສານນະຄອນຄຸນມິງໃນປະຈຸບັນ,ເມື່ອຮອດທ້າຍອາທິດ ແລະ ວັນພັກຕ່າງໆ,ສວນດິນທາມໄດ້ກາຍເປັນທີ່ນິຍົມຊົມຊອບຈາກຊາວຄຸນມິງ ແລະ ນັກທ່ອງທ່ຽວ. ໃນເວລາຊົມທິວທັດທຳມະຊາດອັນສວຍງາມຂອງໜອງນ້ຳພູພຽງນັ້ນ,ຍັງຈະໄດ້ພົບກັບເປັດປ່າ ແລະ ນົກນ້ຳຕ່າງໆ.

ແຕ່ປີ 2008 ເປັນຕົ້ນມາ,ເຂດຊີ່ສານໄດ້ດຳເນີນການກໍ່ສ້າງລະບົບນິເວດແຄມໜອງຢູ່ຂອບເຂດແຄມໜອງຕ່ຽນຊືໂດຍຜ່ານຈາກ“ປັບສະນ້ຳກັບຄືນສູ່ດິນທາມ, ປັບດິນປູກຝັງກັບຄືນເປັນປ່າໄມ້”,ມາຮອດປະຈຸບັນ,ໄດ້ສ້າງແຖບລະບົບນິເວດຮອບໜອງເປັນເນື້ອທີ່ປະມານ



1450 ເຮັກຕາເຊິ່ງລວມທັງດິນທາມຮອບໜອງ,ແລະ ປ່າໄມ້ແຄມໜອງ.ປະຈຸບັນ,ເຂດຊີ່ສານໄດ້ກາຍເປັນເຂດເມືອງໃໝ່ແບບສວນທຳມະຊາດທີ່ມີລັກສະນະ “ຕົວເມືອງເຄິ່ງໜຶ່ງແມ່ນພູຜາແມ່ນ້ຳ ແລະ ອີກເຄິ່ງໜຶ່ງແມ່ນນ້ຳໜອງ,ເຄິ່ງໜຶ່ງແມ່ນສີສັນລະດູບານໃໝ່ ແລະ ອີກເຄິ່ງໜຶ່ງຄືຄວາມຝັນ”.

ການປັບປຸງຕັ້ງແຕ່ແຫຼ່ງນ້ຳ

ໜອງຕ່ຽນຊືເປັນໜອງພູພຽງທີ່ມີເນື້ອທີ່ໃຫຍ່ກວ່າໝູ່ຂອງແຂວງຢຸນນານ,ມີຊື່ເປັນ“ມຸກໄສພູພຽງ”.ລວງຍາວຮອບໜອງຕ່ຽນຊືຢູ່ເຂດຊີ່ສານທັງໝົດແມ່ນ 68 ກິໂລແມັດ,ທະເລຫຍ້າທີ່ມີເນື້ອທີ່ 12 ກິໂລຕາແມັດນັ້ນມີ 10 ກິໂລຕາແມັດແມ່ນຢູ່ໃນບໍລິເວນເຂດຊີ່ສານ,ຢູ່ໃນເຂດຄຸ້ມຄອງມີແມ່ນ້ຳພ້ອມສາຂາ(ລວມທັງຄອງນ້ຳ)ທັງໝົດ 32 ສາຍ,ຍາວທັງໝົດ 167,8 ກິໂລແມັດ,ທະເລຫຍ້າແມ່ນເຂດໃຈກາງຂອງໜອງຕ່ຽນຊື,ແມ່ນເຂດແຄມນ້ຳທີ່ມີເນື້ອທີ່ໃຫຍ່ທີ່ສຸດ ແລະ ມີຄວາມສຳຄັນທີ່ສຸດຂອງນະຄອນຄຸນມິງ,ຖືວ່າເປັນ “ດວງຕາ”ຂອງຄຸນມິງ.

ເຂດຊີ່ສານໄດ້ຕັ້ງໜ້າດຳເນີນການກໍ່ສ້າງສິ່ງບຳບັດນ້ຳເປື້ອນຢູ່ໃນຕາແສງ ແລະ ກຸ່ມບ້ານຕ່າງໆ,ເພື່ອຄວບຄຸມບໍ່ໃຫ້ສິ່ງມົນລະພິດເຂົ້ານ້ຳໜອງຕັ້ງແຕ່ບໍ່ເກີດ. ນັບມາຮອດປະຈຸບັນ,ໄດ້ສຳເລັດການກໍ່ສ້າງລະບົບບຳບັດນ້ຳເປື້ອນຢູ່ 23 ບ້ານ,ເຊັ່ນສຳນັກງານຄຸ້ມຖະໜົນໄທໂຂວ ແລະ ປີ້ຈີ່ເປັນຕົ້ນ,ສຳເລັດການກໍ່ສ້າງສິ່ງກໍ່ສ້າງຈັດແບ່ງນ້ຳຝົນ ແລະ ນ້ຳເປື້ອນຕາມເດີ່ນບ້ານເປັນຈຳນວນ 249 ຄອບຄົວ,ໄດ້ສະກັດກັ້ນບໍ່ໃຫ້ມົນລະພິດໄຫຼເຂົ້າໜອງຕ່ຽນຊືນັ້ນຢ່າງມີປະສິດທິຜົນ.

ເດືອນ ກັນຍາ ປີ 2014,ເຂດຊີ່ສານໄດ້ສຳເລັດການປັບປຸງສິ່ງແວດລ້ອມແມ່ນ້ຳຢູ່ໄທໂຂວເຊິ່ງເປັນໂຄງການປັບປຸງລຳແມ່ນ້ຳໜອງຕ່ຽນຊືທີ່ໄດ້ໃຊ້ງົບປະມານຫຼາຍທີ່ສຸດຂອງເຂດຊີ່ສານ,ຫຼັງຈາກການປັບປຸງແບບສັງລວມ, ແມ່ນ້ຳໄທໂຂວຈະສາມາດແກ້ໄຂບັນຫາປ້ອງກັນນ້ຳຖ້ວມ,ໃຫ້ນ້ຳຫຼັ່ງໄຫຼໄດ້ຢ່າງສະດວກ,ສະກັດກັ້ນມົນລະພິດ, ແລະ ຮັກສາລະບົບນິເວດເປັນຕົ້ນ,ເຮັດໃຫ້ນ້ຳທີ່ໄຫຼເຂົ້າໜອງຕ່ຽນຊືນັ້ນມີຄວາມສະອາດກວ່າເກົ່າ,ສິ່ງແວດລ້ອມອ້ອມຮອບໜອງຕ່ຽນຊືງາມກວ່າເກົ່າ,ເຮັດໃຫ້ດອກໄຫໄຊ້ທີ່ບໍ່ໄດ້ເຫັນມາດົນແລ້ວກໍ່ໄດ້ປາກົດຕົວຂຶ້ນຄືນໃໝ່ຢູ່ໜອງຕ່ຽນຊື.

ປະຈຸບັນ,ຢູ່ເຂດຊີ່ສານໄດ້ສ້າງແຖບລະບົບນິເວດຂອງດິນທາມຮອບໜອງເປັນເນື້ອທີ່ປະມານ 1400 ເຮັກຕາ,ເຊິ່ງລວມທັງຟູ້ຊ້ານ,ຊີ່ຮວາ,ໄຫເຜີງ,ແລະ ຫົງນີຈຸຍເປັນຕົ້ນ.ຢູ່ເບື້ອງຫຼັງຂອງທິວທັດອັນສວຍງາມຮອບໜອງຕ່ຽນຊືນັ້ນແມ່ນການປັບປຸງດີຂຶ້ນຂອງຄຸນນະພາບນ້ຳໜອງຕ່ຽນຊື.

ໃນຊຸມປີມໍ່ໆມານີ້, ໂດຍອີງຕາມຄວາມຮຽກຮ້ອງຂອງຄະນະພັກນະຄອນຄຸນມິງ ແລະ ອຳນາດການປົກ





